ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ເມສາ 2025
ປີທີ 14
ສະບັບທີ 1015
ລາຍສັປະດາ


## ປະທານສະພາແຫ່ງຊາດ ພົບປະປະທານປະເທດຫວຽດນາມ



(ສພຊ) - ໃນຕອນເຊົ້າຂອງວັນທີ 25 ເມສາ 2025 ທີ່ສະພາແຫ່ງຊາດ, ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບແລະພົບປະກັບສະຫາຍ ເລືອງ ເກື່ອງ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ ແຫ່ງ ສສ.ຫວຽດ

ອ່ານຕໍ່ໜ້າ 3




ລັດເຮົາເປັນ "ຕົວແທນແຫ່ງອຳນາດຂອງປະຊາຊົນ, ເປັນຜູ້ຈັດຕັ້ງ ແລະ ຊີ້ນຳການປະຕິບັດບັນດາແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ, ເປັນຜູ້ຄຸ້ມຄອງອຳນວຍຄວບຄຸມທຸກການເຄື່ອນໄຫວຂອງສັງຄົມ ຕາມກົດໝາຍ".

(ນິພົນເລືອກເຟັ້ນ ເຫຼັ້ມ III, ໜ້າ 477 ຂອງປະທານ ໄກສອນ ພົມວິຫານ)

ລັດ ຈະກາຍເປັນລັດແຫ່ງອຳນາດກົດໝາຍຢ່າງແທ້ຈິງກໍຕໍ່ເມື່ອມັນໄດ້ຖືກົດໝາຍສູງກວ່າສິ່ງໃດໆທັງໝົດ, ສັນຍະລັກຂອງລັດ ແຫ່ງອຳນາດກົດໝາຍ ແມ່ນລັດທີ່ມີກົດໝາຍ ແລະ ສະຕິເຄົາລົບກົດໝາຍຂອງທົ່ວສັງຄົມ ໄດ້ມີທີ່ຕັ້ງຜູກຂາດແບບເດັດຖານ, ລະບົບສິດ ແລະ ເສລີພາບຂອງພົນລະເມືອງ ໄດ້ຮັບການເປີດກວ້າງ ແລະ ມີກົນໄກ ເພື່ອປົກປ້ອງບັນດາສິດດັ່ງກ່າວ.

(ນິພົນເລືອກເຟັ້ນ ເຫຼັ້ມ III, ໜ້າ 482 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນເມສາ

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນເມສາ 2025 ໄດ້ດຳເນີນໃນວັນທີ 24-25 ເມສານີ້ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳ ແລະ ກຳມະການໃນຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະ




ມົນຕີແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ:ລາຍງານຜົນການຮຽບຮຽງເນື້ອໃນ 3 ກົດໝາຍສະບັບປັບປຸງຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງ

ອ່ານຕໍ່ໜ້າ 7

## ຮຽບຮຽງເນື້ອໃນກົດໝາຍພະນັກງານ-ລັດຖະກອນ



ອ່ານຕໍ່ໜ້າ 11

## ສະຫາຍ ພົທ. ສຸວອນ ເລືອງບຸນມີ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ຫວຽດນາມ

(ສພຊ) - ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ນຳໂດຍສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ສຳເລັດການຢ້ຽມຢາມ ແລະແລກປ່ຽນບົດຮຽນຢູ່ ສສ. ຫວຽດນາມ ໃນລະຫວ່າງວັນທີ 20-26 ເມສາ 2025.

ອ່ານຕໍ່ໜ້າ 7



## ຄະນະຮັບຜິດຊອບສ້າງປຶ້ມ 50 ປີ ສຳເລັດການເຮັດວຽກຢູ່ຫວຽດນາມ



(ສພຊ) - ຄະນະຮັບຜິດຊອບສ້າງປຶ້ມ 50 ປີ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ນຳໂດຍສະຫາຍ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຮອງຫົວໜ້າຄະນະຊີ້ນຳຮັບຜິດ ຊອບສ້າງປຶ້ມ 50 ປີ ພ້ອມດ້ວຍຄະນະໄດ້ສຳເລັດເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ

ອ່ານຕໍ່ໜ້າ 11

## ປະເມີນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 4 ບຸກ



(ສພຊ) - ວັນທີ 23 ເມສານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມວຽກງານກວດການ, ປະເມີນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ4ບຸກ ຂອງຊາວໜຸ່ມປະຊາຊົນປະຕິວັດລາວ ສະພາແຫ່ງຊາດ ຄັ້ງທີ III

ອ່ານຕໍ່ໜ້າ 3



ສີ ຈິ້ນຜິງ... (ໜ້າ 9)



ຄະນະຜູ້ແທນ... (ໜ້າ 10)

ເບິ່ງໄວ້ ໄດ້ຂີດຮຽນ

❖ ວິເສດ ສະແຫວງສຶກສາ

ຮູ້ວິທີດຶງດູດການລົງທຶນ... (ໜ້າ 12)

## ຂໍ່ານັບຮັບຕ້ອນວັນກຳມະກອນສາກົນ ຄົບຮອບ 139 ປີ (1/5/1886 - 1/5/2025)

## ກອງປະຊຸມຄະນະກຳມະການປະສານງານ WAIPA ຄັ້ງທີ 4




(ສພຊ) - ວັນທີ 21-24 ເມສາ 2025, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ, ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການປະສານງານສະມາຊິກລັດຖະສະພາເພດຍິງໄອປາຫຼືໄວປາ (WAIPA) ຄັ້ງທີ 4 ທີ່ຄູຊິງ, ສະລາວັກ, ປະເທດມາເລເຊຍ ພາຍໃຕ້ຫົວຂໍ້ "ການຂັບເຄື່ອນນະວັດຕະກຳ, ການມີສ່ວນຮ່ວມ ແລະ ຄວາມຫຼາກຫຼາຍຜ່ານລັດຖະສະພາທີ່ມີຄວາມສົມດຸນລະຫວ່າງຍິງ-ຊາຍ ເພື່ອອາຊຽນທີ່ມີຄວາມພ້ອມໃນອະນາຄົດ" ໂດຍການເປັນປະທານຂອງທ່ານ ນາງ ອະລິຊ ຫຼິວ ກຽງ ຢຽງ (Alice Lau Kiong Yieng) ຮອງປະທານສະພາຜູ້ແທນລາສະດອນ (ສະພາຕ່ຳ) ມາເລເຊຍ, ປະທານກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ເຊິ່ງມີທ່ານເລຂາທິການໃຫຍ່ໄອປາ, ສະມາຊິກລັດຖະສະພາເພດຍິງຈາກບັນດາລັດຖະສະພາທີ່ເປັນສະມາຊິກໄອປາ ພ້ອມທັງປະເທດຕີມໍ ແລັດສະເຕ ເຂົ້າຮ່ວມໃນຖານະປະເທດສັງເກດການ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອຮັບຟັງການນຳສະເໜີບົດກ່ຽວກັບການຂັບເຄື່ອນນະວັດຕະກຳ, ການມີສ່ວນຮ່ວມ ແລະ ຄວາມຫຼາກຫຼາຍ ຜ່ານລັດຖະສະພາທີ່ມີຄວາມສົມດຸນລະຫວ່າງຍິງ-ຊາຍ ເພື່ອອາຊຽນທີ່ມີຄວາມພ້ອມໃນອະນາຄົດ ເຊິ່ງສະເໜີໂດຍປະເທດເຈົ້າພາບ, ມີການສົນທະນາ, ປຶກສາຫາລືແລະແລກປ່ຽນຄຳເຫັນ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ທີ່ຕິດພັນກັບແຜນປະຕິບັດງານ ແລະ ຂອບແຜນການຈັດຕັ້ງປະຕິບັດການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ການເປັນຜູ້ນຳຂອງແມ່ຍິງ (WPPL) ພ້ອມທັງປຶກສາຫາລືກ່ຽວກັບລະບຽບການຂອງກອງປະຊຸມໄວປາ ກ່ຽວກັບພາລະບົດບາດການຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານດັ່ງກ່າວ; ຄະນະຜູ້ແທນລາວ ໄດ້ຄົ້ນຄວ້າ, ປະກອບຄຳເຫັນເຊິ່ງເປັນຄຳເຫັນທີ່ສຳຄັນໃນຄວາມຄືບໜ້າຂອງການຈັດຕັ້ງຜັນຂະຫຍາຍແຜນປະຕິບັດງານການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ການເປັນຜູ້ນຳຂອງແມ່ຍິງ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດເພດຍິງ ເພື່ອເພີ່ມຂີດຄວາມສາມາດ ແລະ ຄວາມໝັ້ນໃຈໃນການປະຕິບັດໜ້າທີ່ທີ່ສຳຄັນ ໃນຖານະທີ່ເປັນຕົວແທນ, ການຕັດສິນບັນຫາ ແລະ ຕິດຕາມກວດກາ, ການຊຸກຍູ້ສົ່ງເສີມການເພີ່ມຈຳນວນສະມາຊິກສະພາແຫ່ງຊາດເພດຍິງ ໃຫ້ໄດ້ 30% ເພື່ອເປັນການກະກຽມໃຫ້ແກ່ການເລືອກຕັ້ງໃນຄັ້ງຕໍ່ໄປ. ຜົນຂອງກອງປະຊຸມຄັ້ງນີ້ ຈະຖືກນຳໄປພິຈາລະນາ ແລະ ຮັບຮອງໃນກອງປະຊຸມໄອປາຄັ້ງທີ 46 ເຊິ່ງຈະຈັດຂຶ້ນຢູ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ໃນລະຫວ່າງວັນທີ 17-22 ກັນຍາ 2025.

## ຮອງປະທານ ກວສຊ ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ



(ສພຂ) - ວັນທີ 23-24 ເມສານີ້, ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ ໂດຍການຕ້ອນຮັບຈາກທ່ານ ສົມສີ ມະນີນິນ ຮອງປະທານສະພາປະຊາຊົນແຂວງ (ສພຂ) ເຊິ່ງໄດ້ເປີດກອງປະຊຸມຢູ່ສະພາປະຊາຊົນແຂວງ, ເຂົ້າຮ່ວມມີຄະນະນຳຂອງສພຂ, ຄະນະຈັດຕັ້ງແຂວງ, ຄະນະພັກນະຄອນປາກເຊ, ຄະນະເລຂາທິການ ສພຂ, ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງນະຄອນປາກເຊ ແລະ ຂະແໜງການທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ທ່ານ ຄຳສິງ ໄຊສົມແພງ ໄດ້ມີຄຳເຫັນ ແລະ ແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້ແມ່ນເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ປຶກສາຫາລືກັບສະພາປະຊາຊົນແຂວງ ກ່ຽວກັບວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ວຽກງານສະພາປະຊາຊົນແຂວງ; ໂອກາດດັ່ງກ່າວ, ທ່ານ ສົມສີ ມະນີນິນ ກໍໄດ້ລາຍງານກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ຂອງ ສພຂ ຈຳປາສັກ ຊຸດທີ II ແລະ ວຽກງານການກະກຽມການເລືອກຕັ້ງ ພ້ອມທັງສະເໜີບາງບັນຫາທີ່ຖອດຖອນບົດຮຽນໄດ້ຈາກການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ. ນອກນີ້, ກອງປະຊຸມຍັງໄດ້ຮັບຟັງການມີຄຳເຫັນລາຍງານ, ປຶກສາຫາລືແລະແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ, ມີຈຸດສຸມ ແລະ ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກບາງດ້ານ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ມີຄວາມສະດວກ, ວ່ອງໄວ, ທັນເວລາ, ຖືກຕ້ອງຕາມລະບຽບຫຼັກການແລະກົດໝາຍກຳນົດໄວ້.

**(ສົມວິຈິດ ໄຊມົນຕີ)**

# ເກັບກຳ ແລະ ຫາລືວຽກງານເລືອກຕັ້ງ ສສຊ ແລະ ສສຂ



(ສພຂ) - ວັນພຸດທີ 23 ເມສາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມເກັບກຳ ແລະ ປຶກສາຫາລືວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໂດຍການເປັນປະທານຮ່ວມຂອງທ່ານ ສຸບັນ ສະວະບຸດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະກຳມະການໃນຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າຂະແໜງຂອງ ສພຂ ພ້ອມດ້ວຍແຂກຖືກເຊີນຈາກບັນດາພະແນກການ, ອົງການ ແລະ ຂະແໜງການກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍສັງເຂບຜົນສຳເລັດການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງແຂວງ ແລະ ເມືອງ; ການປັບປຸງກົງຈັກຂັ້ນແຂວງ ແລະ ຂັ້ນເມືອງ ຕາມຄຳແນະນຳເລກທີ 483/ຄລສພ, ລົງວັນທີ 4 ເມສາ 2025 ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ; ການລາຍງານໂດຍສັງເຂບກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນ, ວຽກງານການການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງອຸດົມໄຊ. ຫຼັງຈາກນັ້ນ, ໄດ້ປຶກສາຫາລື ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ມີຄວາມສະດວກ, ວອງໄວ, ທັນເວລາ, ຖືກຕ້ອງຕາມລະບຽບຫຼັກການ ແລະ ກົດໝາຍກຳນົດໄວ້.

## ພົບປະສອງຝ່າຍລະຫວ່າງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ



(ສພຊ) - ຕອນບ່າຍວັນທີ 24 ເມສາ 2025 ທີ່ສະພາແຫ່ງຊາດ, ທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ, ຮອງປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕ້ອນຮັບ ແລະ ພົບປະກັບທ່ານ ຊາຊາກິ ທາໂຣະ (SASAKI Taro) ເລຂາທິການສະມາຄົມມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ເພື່ອແລກປ່ຽນຄຳຄິດເຫັນໃນການເພີ່ມທະວີ ແລະ ເສີມຂະຫຍາຍການຮ່ວມມືລະຫວ່າງສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ກໍຄືການກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ.

ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືຂອງສອງປະເທດ ທີ່ມີການເຕີບໃຫຍ່ຂະຫຍາຍຕົວທັງໃນສາຍສະພາ, ສາຍລັດຖະບານ ແລະ ການທູດປະຊາຊົນ ຕະຫຼອດໄລຍະ 70 ປີຜ່ານມາໂດຍເຫັນໄດ້ຈາກການນຳຂັ້ນສູງຂອງສອງປະເທດ ໄດ້ມີການແລກປ່ຽນການຢ້ຽມຢາມເປັນປົກກະຕິ, ບັນດາໂຄງການຊ່ວຍເຫຼືອ-ຮ່ວມມືຂອງສອງປະເທດ ກໍໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຄວາມຄືບໜ້າເປັນກ້າວໆເປັນຕົ້ນແມ່ນການແລກປ່ຽນຄະນະຜູ້ແທນລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາຍີ່ປຸ່ນ ກໍຄືລະຫວ່າງສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວທັງແບບເຊິ່ງໜ້າ ແລະ ທາງໄກ. ນອກຈາກນີ້, ຝ່າຍຍີ່ປຸ່ນ ຍັງແຈ້ງໃຫ້ຊາບກ່ຽວກັບການສ້າງຕັ້ງໂຮງຮຽນ ຫຼື ສະຖາບັນການສຶກສາຂອງຍີ່ປຸ່ນຢູ່ລາວ ແນໃສ່ພັດທະນາຊັບພະຍາກອນມະນຸດ ແລະ ຊ່ວຍພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ ໂດຍການກໍ່ສ້າງນັກວິຊາການ, ເຕັກນິກ ແລະ ພາສາຍີ່ປຸ່ນ; ສົ່ງເສີມການແລກປ່ຽນວັດທະນະທຳ, ສົ່ງເສີມການຮ່ວມມືທາງດ້ານທຸລະກິດລະຫວ່າງບໍລິສັດຍີ່ປຸ່ນ ກັບ ບໍລິສັດລາວ ແລະ ອື່ນໆ.

ສອງຝ່າຍຍັງໄດ້ປຶກສາຫາລືກ່ຽວກັບການເຊື້ອເຊີນຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ໄປຢ້ຽມຢາມປະເທດຍີ່ປຸ່ນພາຍຫຼັງການເລືອກຕັ້ງສະພາສູງ ຫຼື ເດືອນກໍລະກົດນີ້.



## ປະທານ...

(ຕໍ່ຈາກໜ້າ 1)

ນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໃນໂອກາດເດີນທາງມາຢ້ຽມຢາມລັດຖະກິດຢູ່ສປປລາວ ແຕ່ວັນທີ24-25ເມສາ2025.

ໃນການພົບປະຄັ້ງນີ້, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ມີໂອກາດພົບປະກັບສະຫາຍປະທານປະເທດ ເລືອງ ເກື່ອງ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ ສສ.ຫວຽດນາມ ພ້ອມທັງຕີລາຄາສູງຕໍ່ການເດີນທາງຢ້ຽມຢາມທາງລັດຖະກິດທີ່ ສປປລາວ ຄັ້ງນີ້ ເຊິ່ງໄດ້ນຳເອົາໄມຕີຈິດມິດຕະພາບອັນອົບອຸ່ນ ແລະ ຄວາມສາມັກຄີຮັກແພງຢ່າງເລິກເຊິ່ງ ມາຍັງພັກ, ລັດຖະບານ ແລະປະຊາຊົນລາວບັນດາເຜົ່າ, ທັງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະແມ່ນສາຍພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ນັບມື້ນັບແຕກດອກອອກຜົນ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.

ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍຕໍ່ສະຫາຍ ເລືອງ ເກື່ອງ ທີ່ໄດ້ຮັບການເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນປະທານປະເທດແຫ່ງ ສສ.ຫວຽດນາມ ຄົນໃໝ່ ແຕ່ເດືອນຕຸລາ 2024 ຜ່ານມາ, ພ້ອມທັງໄດ້ຝາກຄຳຢື້ຢາມຖາມຂ່າວອັນອົບອຸ່ນ ແລະສະໜິດສະໜົມທີ່ສຸດ ໄປຍັງບັນດາສະຫາຍການນຳພັກ, ລັດ, ສະພາແຫ່ງຊາດຫວຽດນາມ ໂດຍສະເພາະສະຫາຍ ເຈິ່ນ ແທັງ ເໝິນ ປະທານສະພາແຫ່ງຊາດຫວຽດນາມ ພ້ອມດ້ວຍບັນດາສະມາຊິກສະພາແຫ່ງຊາດຫວຽດນາມ.

ສະຫາຍ ໄຊສົມພອນ ພົມວິຫານ ຍັງໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງການພົບປະຂອງສອງປະທານປະເທດ ລາວ-ຫວຽດນາມ ໂດຍມີການປຶກສາຫາລືກັນໃນຫຼາຍບັນຫາຢ່າງກົງໄປກົງມາແລະດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງໃນຄອບຄົວດຽວກັນ. ໃນໂອກາດດັ່ງກ່າວ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ຕາງໜ້າພັກ, ລັດ, ສະພາແຫ່ງຊາດ ແລະປະຊາຊົນລາວບັນດາເຜົ່າສະແດງຄວາມຮູ້ບຸນຄຸນແລະຂອບໃຈຢ່າງຈິງໃຈມາຍັງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄ່າ, ມີປະສິດທິຜົນ ແລະທັນການ ໃຫ້ແກ່ປະຊາຊົນລາວ ທັງໃນສະໄໝຕໍ່ສູ້ກູ້ຊາດ ກໍຄືໃນໄລຍະແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ, ພິເສດສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຊ່ວຍເຫຼືອໃນຫຼາຍໂຄງການທີ່ມີຄວາມໝາຍສຳຄັນແລະເປັນສັນຍະລັກແຫ່ງການພົວພັນຮ່ວມມືຂອງສອງປະເທດ ໂດຍສະເພາະຫໍສະພາແຫ່ງຊາດລາວຫຼັງໃໝ່.

ສະຫາຍປະທານປະເທດ ເລືອງ ເກື່ອງ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບອັນອົບອຸ່ນອັນເຕັມໄປດ້ວຍໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງຕໍ່ສະຫາຍ ແລະຄະນະຜູ້ແທນຂັ້ນສູງພັກ-ລັດ ຫວຽດນາມ ໃນຄັ້ງນີ້, ສະແດງຄວາມຂອບໃຈຕໍ່ພັກ, ລັດ ແລະ ປະຊາຊົນລາວ ທີ່ໄດ້ໃຫ້ການສະໜັບສະໜູນສສ.ຫວຽດນາມຕະຫຼອດມາ ແລະ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດໃນການພັດທະນາຂອງ ສປປລາວ ໃນປັດຈຸບັນ, ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດ ຫວຽດນາມ-ລາວ ໃນຕະຫຼອດໄລຍະຜ່ານມາ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນທີ່ຫາຍາກ ໃຫ້ນັບມື້ຈະເລີນງອກງາມ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ພ້ອມກັນນັ້ນ, ສອງຝ່າຍຍັງໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາຕໍ່ການພົວພັນຮ່ວມມືຂອງສອງປະເທດ ໂດຍໄດ້ເຫັນດີເປັນເອກະພາບຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານຂອງສອງປະເທດ ທີ່ສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງທັງທາງກວ້າງ ແລະ ທາງເລິກໃນທຸກຂົງເຂດ ໂດຍສະເພາະການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດກໍໄດ້ມີການແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງ ແລະຂັ້ນຕ່າງໆນຳກັນນັບແຕ່ຂັ້ນສູນກາງຈົນຮອດທ້ອງຖິ່ນ, ໄດ້ຮ່ວມກັນຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນຕ່າງໆ, ຮ່ວມກັນສ້າງປຶ້ມ 50 ປີແຫ່ງສາຍພົວພັນລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ, ຮ່ວມກັນຕິດຕາມກວດກາແລະຊຸກຍູ້ການຮ່ວມມືຂອງສອງປະເທດໃນດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ເປັນຕົ້ນແມ່ນບັນດາໂຄງການທີ່ມີລັກສະນະຍຸດທະສາດກ່ຽວກັບການພັດທະນາພື້ນຖານໂຄງລ່າງ, ການເຊື່ອມໂຍງເຊື່ອມຈອດ ທີ່ການນຳຂອງສອງປະເທດໄດ້ຕົກລົງເຫັນດີຮ່ວມກັນໃຫ້ເປັນຮູບປະທຳໂດຍໄວ ແນໃສ່ພັດທະນາເສດຖະກິດ-ສັງຄົມຂອງສອງປະເທດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ.

# ຮອງປະທານ ກບຜ ເຄື່ອນໄຫວວຽກງານຢູ່ຜົ້ງສາລີ



(ສພຂ) - ວັນທີ 31 ມີນາຜ່ານມາ, ທ່ານ ແກ້ວຈະເລີນ ເຊ່ຍຢື້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ(ກບຜ)ພ້ອມດ້ວຍຄະນະ ໄດ້ເຂົ້າພົບການນຳຂັ້ນສູງແຂວງຜົ້ງສາລີ ທີ່ຫ້ອງວ່າການປົກຄອງແຂວງ ເພື່ອລາຍງານການລົງເຄື່ອນໄຫວຕິດຕາມກວດກາວຽກງານສາສະໜາແລະວຽກງານຈຸດສຸມພັດທະນາ ຢູ່ເມືອງສຳພັນ ແລະ ເມືອງໃໝ່ ໂດຍມີຈຸດປະສົງເພື່ອເກັບກຳຂໍ້ມູນຄຳສະເໜີຂອງປະຊາຊົນຕໍ່ສະພາແຫ່ງຊາດ, ເພື່ອເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນບັນດາເຜົ່າສາມາດຮັບຮູ້ແລະເຂົ້າໃຈເຖິງສະພາບການເຊື່ອຖືສາສະໜາແລະການດຳລົງຊີວິດ, ການປະຕິບັດຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າຢ່າງຖືກຕ້ອງ; ຈາກນັ້ນ, ກໍໄດ້ຈັດກອງປະຊຸມເຮັດວຽກຮ່ວມກັບສະພາປະຊາ ຊົນແຂວງ (ສພຂ) ແລະ ພະແນກການ-ອົງການທີ່ກ່ຽວຂ້ອງຂອງແຂວງ ໂດຍການເປັນປະທານຮ່ວມກັບທ່ານ ສົມຈິດ ຫັບລາກອນ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ.

ກອງປະຊຸມໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດດຳລັດ 315/ລບ ວ່າດ້ວຍການຄຸ້ມຄອງແລະການປົກປ້ອງການເຄື່ອນໄຫວສາສະໜາ, ການແກ້ໄຂບັນຫາຫຍໍ້ທໍ້ທາງດ້ານສາສະໜາໃນໄລຍະຜ່ານມາ; ຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.ທ່ານ ແກ້ວຈະເລີນ ເຊ່ຍຢື້ງຢາງ ໄດ້ເນັ້ນໜັກໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ເຂັ້ມງວດ, ປະຕິບັດໜ້າທີ່ວຽກງານບົນພື້ນຖານທາງດ້ານກົດໝາຍ, ລະບຽບການຕ່າງໆໃຫ້ຖືກຕ້ອງ, ໂປ່ງໃສ, ມີການຕິດຕາມກວດກາເປັນປົກກະຕິ.

ຈາກນັ້ນ, ໄດ້ໄປຢ້ຽມຢາມແລະເຄື່ອນໄຫວວຽກງານຢູ່ຈຸດສຸມພັດທະນາເມືອງສຳພັນ ແລະ ເມືອງໃໝ່.

ໃນໂອກາດເຄື່ອນໄຫວວຽກງານຢູ່ແຂວງຜົ້ງສາລີຄັ້ງນີ້, ຄະນະຂອງທ່ານຮອງປະທານກຳມາທິການບັນດາເຜົ່າ ຍັງໄດ້ນຳເອົາຄອມພິວເຕີ 1 ຊຸດ ມູນຄ່າ 7 ລ້ານກີບ ມອບໃຫ້ ສພຂ ແລະ ປຶ້ມຂຽນຈຳນວນໜຶ່ງ ມູນຄ່າ 3 ລ້ານກວ່າກີບ ມອບໃຫ້ບັນດາບ້ານເປົ້າໝາຍ.



## ປະເມີນ...

(ຕໍ່ຈາກໜ້າ 1)

ໂດຍການເປັນປະທານຮ່ວມຂອງສະຫາຍ ທັນຕາ ກອງຜາລີ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ, ສະຫາຍ ສຸລິຍາແກ້ວພິລາວົງ ກຳມະການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຫົວໜ້າກົມອົບຮົມຊາວໜຸ່ມ ແລະ ສະຫາຍ ໄກມະນີ ເທບບົວລີ ຮອງເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ;ເຂົ້າຮ່ວມມີບັນດາສະຫາຍໃນຄະນະບໍລິຫານງານຊາວໜຸ່ມ, ເລຂາ-ຮອງເລຂາຊາວໜຸ່ມຮາກຖານພາຍໃນ ສພຊ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຂອງຊາວໜຸ່ມສະພາແຫ່ງຊາດ ປະຈຳປີ 2023 ແລະ ບົດລາຍງານຊາວໜຸ່ມຕົວແບບ; ຈາກນັ້ນ, ກໍໄດ້ມີການຄົ້ນຄວ້າຖາມ-ຕອບ, ມີຄຳເຫັນແລກປ່ຽນເຊິ່ງກັນແລະກັນ ເພື່ອກວດກາ, ປະເມີນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນດັ່ງກ່າວ.

ກ່ອນໜ້ານັ້ນ ຄືວັນທີ 22 ເມສາຜ່ານມາ ທີ່ສະພາແຫ່ງຊາດ ກໍໄດ້ມີພິທີປາຖະກະຖາ ທວນຄືນມູນເຊື້ອວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ຄຊປປລາວ) ຄົບຮອບ 70 ປີ (14/4/1955-14/4/2025) ໂດຍການເປັນປະທານຂອງສະຫາຍ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ; ມີບັນດາສະຫາຍຄະນະບໍລິຫານງານຊາວໜຸ່ມ, ເລຂາ-ຮອງເລຂາຊາວໜຸ່ມຮາກຖານ ແລະ ສະມາຊິກຊາວໜຸ່ມພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ. ນອກນັ້ນ, ຍັງໄດ້ມີກິດຈະກຳບານເຕະ ເພື່ອສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງ ຄຊປປລາວ ຄົບຮອບ 70 ປີ ແລະ ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມສະພາແຫ່ງຊາດ ສະໄໝທີ V ທີ່ຈະໄຂຂຶ້ນໃນມໍ່ໆນີ້ ອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**

# ພົບປະສອງຝ່າຍ ສປນວ ກັບ ສະພາປະຊາຊົນນະຄອນຊຽງໄຮ້




(ສປນວ) - ວັນທີ 1 ເມສານີ້ ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ກັບ ຄະນະຜູ້ແທນສະພາປະຊາຊົນນະຄອນຊຽງໄຮ້, ສປຈີນ ເຊິ່ງຝ່າຍ ສປນວ ນຳໂດຍສະຫາຍ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ຝ່າຍສະພາປະຊາຊົນນະຄອນຊຽງໄຮ້ ນຳໂດຍສະຫາຍ ນາງ ຈີງ ມິງ ຮອງປະທານສະພາປະຊາຊົນນະຄອນຊຽງໄຮ້ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຮ່ວມກັນ.

ທັງນີ້, ເພື່ອຈັດຕັ້ງຜັນຂະຫຍາຍແຜນພັດທະນາການຮ່ວມມືລະຫວ່າງສອງພັກ, ສອງລັດ ກໍຄືປະຊາຊົນສອງປະເທດລາວ-ຈີນ, ຈີນ-ລາວ; ຈັດຕັ້ງປະຕິບັດແຜນແມ່ບົດວ່າດ້ວຍການເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ ທັງເປັນການປະກອບສ່ວນໃຫ້ແກ່ການຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບເພື່ອນມິດຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ຄື: ເປັນບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ.

ໃນການພົບປະ, ສອງຝ່າຍໄດ້ລາຍງານສະພາບພົ້ນເດັ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງສອງ 2 ນະຄອນ ໃຫ້ກັນແລະກັນຊາບ; ພ້ອມກັນນັ້ນ, ກໍໄດ້ແລກປ່ຽນບົດຮຽນໃນຫຼາຍດ້ານ ເປັນຕົ້ນການຄຸ້ມຄອງຕົວເມືອງແລະສິ່ງແວດລ້ອມ, ການພັດທະນາເສດຖະກິດ ແລະ ການເງິນ; ທັງສອງຝ່າຍຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບແລະການຮ່ວມມືທີ່ເປັນມູນເຊື້ອທີ່ດີ ລະຫວ່າງນະຄອນຫຼວງວຽງຈັນ ກັບ ນະຄອນຊຽງໄຮ້ ໃນໄລຍະຜ່ານມາ ແລະຈະສືບຕໍ່ຊຸກຍູ້ການພົວພັນຮ່ວມມືລະຫວ່າງສອງສະພາປະຊາຊົນໃນຕໍ່ໜ້າ ໃຫ້ມີຄວາມເລິກເຊິ່ງຍິ່ງຂຶ້ນ.

# ຄປຈສພຂ ພິຈາລະນາບັນຫາສຳຄັນພື້ນຖານຂອງແຂວງ



(ສພຂ) - ວັນທີ 8 ເມສາຜ່ານມາ, ຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ອຸດົມໄຊ ໄດ້ເປີດກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ກຳມະການປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີທ່ານນາງຄຳພອນ ພົມມະຈັນ ຮອງປະທານ ຄປຈສພຂ, ບັນດາທ່ານໃນ ຄປຈສພຂ, ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໄຊ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ, ແຂກຖືກເຊີນແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງແຂວງ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນແມ່ນບົດລາຍງານຜົນການຄົ້ນຄວ້າ ແລະ ສ້າງຮ່າງຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການທົດແທນຄ່າເສຍຫາຍຈາກໂຄງການພັດທະນາປີ່ນອ້ອມສະຖານີລົດໄຟເມືອງໄຊ, ໂຄງການກໍ່ສ້າງຫ້ອງການສະພາປະຊາຊົນແຂວງ, ຫໍຫຼັກເມືອງ, ສະໜາມຫຼວງ ແລະ ໂຄງການກໍ່ສ້າງທາງດ່ວນຊ່ວງຜ່ານເທດສະບານເມືອງໄຊ ໃນເນື້ອທີ່ 347 ເຮັກຕາ; ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງ ສະບັບເລກທີ 350/ອຊ, ລົງວັນທີ 21 ມີນາ 2025 ສະເໜີດັດແກ້ເພີ່ມມູນຄ່າກໍ່ສ້າງປັບປຸງຟື້ນຟູຄອງເໝືອງອ່າງນ້ຳແຮງ ບ້ານນາຊຽງດີ ເມືອງຮຸນ ທີ່ນອນໃນແຜນການລົງທຶນຂອງລັດປີ 2025 (ທຶນປົກກະຕິ) ແລະ ໜັງສືສະເໜີຂອງທ່ານເຈົ້າແຂວງ ສະບັບເລກທີ 358/ອຊ, ລົງວັນທີ 24 ມີນາ 2025 ຂໍພິຈາລະນາອອກມະຕິຮັບຮອງການຫັນປ່ຽນປະເພດທີ່ດິນກະສິກຳໄປເປັນດິນປຸກສ້າງ; ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄປຈສພຂປະຈຳເດືອນມີນາ ແລະ ທິດທາງແຜນການປະຈຳເດືອນເມສາ2025. ຈາກນັ້ນ, ກໍໄດ້ມີຄຳເຫັນແລກປ່ຽນເຊິ່ງກັນແລະກັນ, ພ້ອມທັງຮັບຟັງການຊີ້ແຈງເພີ່ມຕື່ມຈາກຄະນະຮັບຜິດຊອບ ວ່າເນື້ອຈຸດໃດຄວນປັບປຸງ ແລະ ຮັກສາໄວ້ຄືເກົ່າ ເພື່ອຄວາມຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ.

# ສພຂ ບໍ່ແກ້ວ-ເຊກອງ ພົບປະແລກປ່ຽນບົດຮຽນ




(ສພຂ) - ວັນທີ 23 ເມສາຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການແຂວງບໍ່ແກ້ວ ໄດ້ມີກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ແລະ ສະພາປະຊາຊົນແຂວງເຊກອງ ໂດຍການເປັນປະທານຮ່ວມຂອງທ່ານ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານ ສພຂ ບໍ່ແກ້ວ ແລະ ທ່ານ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານ ສພຂ ເຊກອງ.

ສອງຝ່າຍໄດ້ແລກປ່ຽນບົດຮຽນກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ, ການຈັດຕັ້ງປະຕິບັດວຽກງານຕາມ 3 ພາລະບົດບາດຂອງ ສພຂ, ການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ, ການຕິດຕາມກວດກາມະຕິກອງປະຊຸມ ສພຂ, ການພົວພັນປະສານງານລະຫວ່າງບັນດາກົງຈັກການຈັດຕັ້ງຂອງ ສພຂ ກັບພະແນກການອ້ອມຂ້າງແຂວງ. ການແລກປ່ຽນບົດຮຽນຄັ້ງນີ້ ແມ່ນເພື່ອເປັນໃຈກາງການພົວພັນປະສານງານເຊິ່ງກັນແລະກັນ, ຮັບປະກັນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນຢ່າງແທ້ຈິງ; ຈາກນັ້ນ, 2 ປະທານ ໄດ້ລົງນາມເຊັນບົດບັນທຶກຄວາມເຂົ້າໃຈ ເພື່ອເປັນບ່ອນອີງໃຫ້ສະພາປະຊາຊົນທັງ 2 ແຂວງ ໄດ້ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາໜ້າວຽກທີ່ໄດ້ເປັນເອກະພາບກັນຢູ່ກອງປະຊຸມພົບປະແລກປ່ຽນບົດຮຽນໃນເທື່ອນີ້ໃຫ້ມີຜົນສຳເລັດຢ່າງຕັ້ງໜ້າ.

ໃນຕອນບ່າຍຂອງວັນດຽວກັນ, ບັນດາຜູ້ແທນກອງປະຊຸມ ຍັງໄດ້ໄປກາບໄຫວ້ສັກກາລະບູຊາພຣະເຈົ້າໃຫຍ່ ອົງຫຼວງ ຢູ່ວັດທອງທິບພັດທະນາຣາມ ເພື່ອເປັນສິລິມຸງຄຸນ ແລະ ທັດສະນະຢ້ຽມຊົມເຂດເສດຖະກິດພິເສດສາມຫຼ່ຽມຄຳອີກດ້ວຍ.

**(ນາງ ນາລີວັນ)**

# ສພຂ ຫົວພັນ-ແທັງຮວ່າ ພົບປະສອງຝ່າຍ



(ສພຂ)-ເພື່ອເປັນການເສີມຂະຫຍາຍມູນເຊື້ອຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານລະຫວ່າງລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ມີມາແຕ່ດົນນານ ໃຫ້ເຕີບໃຫຍ່ເຂັ້ມແຂງ, ເກີດດອກອອກຜົນປາກົດຜົນເປັນຈິງ ກໍຄືແຂວງຫົວພັນ-ແຂວງແທັງຮວ່າເວົ້າລວມ, ເວົ້າສະເພາະສະພາປະຊາຊົນແຂວງ (ສພຂ) ຫົວພັນ ແລະ ສະພາປະຊາຊົນແຂວງແທັງຮວ່າ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ ທັງເປັນການສືບຕໍ່ຜັນຂະຫຍາຍບົດບັນທຶກຊ່ວຍຈຳທີ່ກອງປະຊຸມພົບປະແລກປ່ຽນບົດຮຽນການເຄື່ອນໄຫວທັງສອງຝ່າຍ ລະຫວ່າງ ສພຂ ຫົວພັນ ແລະ ສພຂ ແທັງຮວ່າທີ່ໄດ້ລົງນາມຮ່ວມກັນໃນຜ່ານມາ.

ວັນທີ 7 ເມສາຜ່ານມາ, ສະຫາຍ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ປະທານສະພາປະຊາຊົນແຂວງຫົວພັນພ້ອມດ້ວຍບັນດາສະຫາຍຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ສພຂ ຫົວພັນ ໄດ້ຕ້ອນຮັບການມາພົບປະຢ້ຽມຢາມຂອງຄະນະຜູ້ແທນສະພາປະຊາຊົນແຂວງແທັງຮວ່ານຳໂດຍສະຫາຍ ເລ ຕຽນ ລາມ ຄະນະປະຈຳພັກແຂວງ, ຮອງປະທານຜູ້ປະຈຳການສະພາປະຊາຊົນແຂວງແທັງຮວ່າ.

ໃນການພົບປະ, ສອງຝ່າຍໄດ້ລາຍງານໂດຍສັງເຂບໃຫ້ກັນຊາບກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ຕາມພາລະບົດບາດ, ສິດຂອງຕົນ ໃນນາມເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ຈາກນັ້ນ, ກໍໄດ້ພ້ອມກັນສົນທະນາແລກປ່ຽນບົດຮຽນບາງດ້ານທີ່ສອງຝ່າຍໃຫ້ຄວາມສົນໃຈເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສອງສະພາປະຊາຊົນແຂວງ ມີຄວາມເຕີບໃຫຍ່ເຂັ້ມແຂງຂຶ້ນເລື້ອຍໆ.

# ຄລສຂ ຫົວພັນ ສະຫຼຸບວຽກງານປີ 2024



(ສພຂ)-ກອງປະຊຸມສະຫຼຸບວຽກງານປະຈຳປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ຄລສຂ) ຫົວພັນ ໄດ້ຈັດຂຶ້ນເມື່ອວັນທີ 28 ມີນາ ຜ່ານມາ ໂດຍການເປັນປະທານຂອງທ່ານ ຄອນເສີດ ດອນວິໄຊ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ), ບັນດາທ່ານຄະນະປະຈຳ ແລະ ຮອງປະທານຄະນະກຳມະການ ສພຂ, ຕາງໜ້າບັນດາພະແນກການ-ອົງການທຽບເທົ່າຂັ້ນແຂວງ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ສະຫຼຸບຕີລາຄາຄືນໝາກຜົນຂອງການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງຄະນະເລຂາທິການສະພາປະຊາຊົນແຂວງ, ແລກປ່ຽນ ແລະຖອດຖອນບົດຮຽນລະຫວ່າງບັນດາກົງຈັກທີ່ເປັນເສນາທິການໃຫ້ແກ່ ຄລສຂ ເພື່ອປັບປຸງລະບອບແບບແຜນວິທີເຮັດວຽກ, ແບບແຜນວິທີນຳພາ ແລະ ກົນໄກການປະສານງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ກັບບັນດາພະແນກການຂອງອົງການປົກຄອງແຂວງ ໃຫ້ມີປະສິດທິຜົນສູງຂຶ້ນ; ກອງປະຊຸມຍັງໄດ້ຄົ້ນຄວ້າ, ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນດ້ວຍຄວາມຮັບຜິດຊອບສູງຕໍ່ຂໍ້ຄົງຄ້າງເພື່ອຖອດຖອນບົດຮຽນ, ປັບປຸງວຽກງານຂອງ ຄລສຂ ເປັນຕົ້ນການເປັນເສນາທິການ, ການປະສານງານ, ການສະໜອງຂໍ້ມູນ ເພື່ອຮັບປະກັນດ້ານເນື້ອໃນໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ໃນການກະກຽມການດຳເນີນກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດແລະຂອງສພຂ. ໂອກາດນີ້, ຍັງໄດ້ມອບໃບຍ້ອງຍໍຂອງທ່ານເຈົ້າແຂວງ ໃຫ້ບັນດາທ່ານຄະນະນຳ ແລະ ພະນັກງານ-ລັດຖະກອນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານໃນໜຶ່ງປີຜ່ານມາ.

**(ເວີນ ແກ້ວບຸນມີ)**

# ກອງປະຊຸມປະຈຳປີ 2024 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 10



(ສພຂ) ວັນທີ 25 ເມສານີ້, ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໄດ້ຈັດກອງປະຊຸມປະຈຳປີ2024 ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10; ເຂົ້າຮ່ວມມີຮອງເຈົ້າແຂວງ, ປະທານອົງການແນວລາວສ້າງຊາດແຂວງ ແລະ ຫົວໜ້າພະແນກການຂອງແຂວງ.

ທ່ານ ບຸນສອນ ເພັດລາວັນ ໄດ້ກ່າວວ່າ: ເນື້ອໃນທີ່ໄດ້ນຳມາສະເໜີໃນກອງປະຊຸມຄັ້ງນີ້ ລ້ວນແຕ່ແມ່ນບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ, ຂອງແຂວງ ຈຶ່ງຮຽກຮ້ອງໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈົ່ງເຊີດຊູຄວາມຮັບຜິດຊອບການເມືອງໃນການຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງບົນພື້ນຖານສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງແຂວງ ໃນຖານະທີ່ເປັນຕົວແທນຂອງປະຊາຊົນບັນດາເຜົ່າ, ເສີມຂະຫຍາຍສິດປະຊາທິປະໄຕແລະຄວາມສາມັກຄີ ໃນການປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການປີ 2025 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ໃຫ້ບັນລຸຜົນຕາມຈຸດປະສົງຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ2025, ບົດລາຍງານຫຍໍ້ຂອງພະແນກການເງິນແຂວງ ກ່ຽວກັບການເກັບລາຍຮັບທີ່ຕິດພັນກັບການຂຸດຄົ້ນແຮ່ທາດພາຍໃນແຂວງ ປະຈຳປີ 2024, ບົດລາຍງານຫຍໍ້ຂອງພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບຜົນງານເດັ່ນໃນການລົງທຶນຂອງລັດ, ບົດລາຍງານຫຍໍ້ຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ ກ່ຽວກັບບັນຫາທີ່ເຄັ່ງຮ້ອນການຂຸດຄົ້ນແຮ່ທາດ, ບົດລາຍງານຫຍໍ້ຂອງພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ ກ່ຽວກັບການເຊົ່າສຳປະທານດິນທີ່ຕິດພັນກັບການຂຸດຄົ້ນແຮ່ທາດ ແລະ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ. ຫຼັງຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມໄດ້ພ້ອມກັນປະກອບຄຳເຫັນໃສ່ຮ່າງບົດສະຫຼຸບດັ່ງກ່າວຢ່າງມີຈຸດສຸມ, ກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ ແລະ ສອດຄ່ອງກັບການປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງສສຊ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**(ບຸລາຕີ ແສນທະວົງ)**

# ຕິດຕາມຊຸກຍູ້ການປະຕິບັດວຽກງານຂອງ ບັນດາໂຄງການຢູ່ແຂວງບໍລິຄຳໄຊ



(ສພຂ) - ວັນທີ 31 ມີນາ-1 ເມສາຜ່ານມາ, ທ່ານ ປອ. ສຸວັນນີ ໄຊຊະນະຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະນຳຂອງເມືອງ, ພະແນກການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຢ້ຽມຢາມ, ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານໂຄງການກໍ່ສ້າງຊົນລະປະທານນ້ຳກະຕະ (ທົ່ງແສນ) ຂອງບໍລິສັດ ປະດົດ ກໍ່ສ້າງຄົບວົງຈອນ ເຂດບ້ານນາທ່ອນ, ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳເຄົ້າ ຂອງບໍລິສັດ ທ້າຍຊານມົງຈິງ ມາຍນິງ ຈຳກັດ, ໂຄງການຂຸດຄົ້ນຫີນມາໂບ ຂອງບໍລິສັດ ຈິນໄທເຕ່ີ ຄຳເກີດ ມາໂບພັດທະນາບໍ່ແຮ່ຈຳກັດ, ໂດຍມີຜູ້ຕາງໜ້າບໍລິສັດ ແລະ ພາກສ່ວນກ່ຽວຂ້ອງ ໃຫ້ການຕ້ອນຮັບ; ທັງນີ້, ກໍເພື່ອຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້າແລະໂຄງການຂຸດຄົ້ນແຮ່ທາດທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດການດຳເນີນໂຄງການໃນໄລຍະຜ່ານມາ, ໜ້າວຽກປັດຈຸບັນ ແລະ ທິດທາງແຜນການໃນຕໍ່ໜ້າ ພ້ອມທັງສົນທະນາແລກປ່ຽນກ່ຽວກັບບາງບັນຫາທີ່ມີຄວາມສົນໃຈໂດຍສະເພາະບັນຫາເລື່ອງທີ່ດິນ, ການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ ໂດຍຊອກໃຫ້ໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ.

ທ່ານ ປອ. ສຸວັນນີ ໄຊຊະນະໄດ້ມີຄຳເຫັນສະແດງຄວາມຊົມເຊີຍຕໍ່ບັນດາບໍລິສັດ ທີ່ໄດ້ປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືຂອງທ້ອງຖິ່ນທັງເປັນທ່າແຮງໃນການພັດທະນາທ້ອງ ຖິ່ນບ່ອນໂຄງການຕັ້ງຢູ່ໃຫ້ດີຂຶ້ນເປັນກ້າວໆພ້ອມທັງຮຽກຮ້ອງໃຫ້ບໍລິສັດທີ່ມາລົງທຶນພັດທະນາດຳເນີນກິດຈະການຂອງຕົນໃຫ້ຖືກຕ້ອງຕາມຂັ້ນຕອນ, ຕາມການອະນຸຍາດຂອງລັດຖະບານ ບົນພື້ນຖານສອດຄ່ອງຕາມລະບຽບກົດໝາຍ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ການຟື້ນຟູປ່າ ແລະ ປູກປ່າທົດແທນຄືນ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະການປະຕິບັດພັນທະຕ່າງໆໃຫ້ແກ່ລັດຕາມສັນຍາແລະກົດໝາຍກຳນົດ; ພ້ອມນັ້ນ, ຍັງໄດ້ສະເໜີອົງການປົກຄອງທ້ອງຖິ່ນ ແລະ ພະແນກການຕ່າງໆ ເພີ່ມທະວີການປະສານສົມທົບເຊິ່ງກັນແລະກັນໃນການຕິດຕາມກວດກາໂຄງການພັດທະນາແຮ່ທາດ ແລະ ໃຫ້ຈັດຕັ້ງປະຕິບັດສອດຄ່ອງຕາມສັນຍາ ແລະ ລະບຽບກົດໝາຍຮັບປະກັນຜົນປະໂຫຍດຂອງລັດ, ຜູ້ປະກອບການ ແລະ ປະຊາຊົນ ແລະ ບໍ່ໃຫ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມແລະທຳມະຊາດ ເກີນກວ່າແຜນກຳນົດໄວ້.

ວັນທີ 1-2 ເມສາ, ທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະແລະພະແນກການທີ່ກ່ຽວຂ້ອງ, ການນຳຂອງເມືອງ ເຄື່ອນໄຫວຢ້ຽມຢາມ, ຕິດຕາມຊຸກຍູ້ການຈັດຕັ້ປະຕິບັດວຽກງານຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້ານ້ຳເທີນ 1 (ເຂດຈັດສັນບ້ານຫ້ວຍຫອຍ, ເມືອງວຽງທອງ) ແລະ ໂຄງການຂຸດຄົ້ນແຮ່ແກ້ວນາງຟານ ຂອງບໍລິສັດ ແສງຈັນຊີລິຄອນ ມາຍນິງ ຈຳກັດ.

ວັນທີ 4 ເມສາ, ທ່ານນາງ ຟອງສະໝຸດ ພົງວິຈິດ ເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຄະນະແລະພະແນກການທີ່ກ່ຽວຂ້ອງ, ການນຳຂອງເມືອງເຄື່ອນໄຫວຢ້ຽມຢາມ, ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນນ້ຳງຽບ 1.

ການເຄື່ອນໄຫວໃນຄັ້ງນີ້, ໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ໃນວຽກງານຄົ້ນຄວ້າ ແລະ ປັບປຸງນິຕິກຳ, ມູນນິທິເອເຊຍ (TAF).

**(ນາງ ໂສລະຢ້າ ໄຊຍະວົງ)**



# ທາລົ ແລະ ຊີ້ແຈງເນື້ອໃນການປັບປຸງຮ່າງຂໍ້ຕົກລົງເຈົ້າແຂວງຄຳມ່ວນ



(ສພຂ) - ວັນທີ 19 ມີນາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ, ຄະນະຮັບຜິດຊອບກວດກາສ້າງ ແລະ ປັບປຸງຮ່າງນິຕິກຳໃຕ້ກົດໝາຍ ຂອງ ສພຂ ໄດ້ຈັດກອງປະຊຸມຮ່ວມກັບອົງການປົກຄອງແຂວງ ໂດຍການເປັນປະທານຂອງທ່ານ ຄຳສຸກ ວັນທະວົງສາ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ມີຫົວໜ້າ ແລະ ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ (ຄະນະຮັບຜິດຊອບສ້າງ ແລະ ປັບປຸງຮ່າງຂໍ້ຕົກລົງຂອງເຈົ້າແຂວງ) ພ້ອມດ້ວຍກອງເລຂາຊ່ວຍວຽກນິຕິກຳ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງຂອງ ສພຂ ເຂົ້າຮ່ວມທັງໝົດ 19 ທ່ານ, ຍິງ 05 ທ່ານ.

ຈຸດປະສົງເພື່ອປຶກສາຫາລືແລະຊີ້ແຈງບາງເນື້ອໃນພ້ອມທັງລາຍງານຜົນຂອງການປັບປຸງຮ່າງຂໍ້ຕົກລົງເຈົ້າແຂວງຄຳມ່ວນ ຈຳນວນ 3 ສະບັບທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ຕາມການປະກອບຄຳຄິດຄຳເຫັນຂອງສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມດັ່ງກ່າວ.

ຕາງໜ້າຈາກພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກສຶກສາທິການແລະກິລາ ໄດ້ຜັດປ່ຽນກັນລາຍງານກ່ຽວກັບການປັບປຸງເນື້ອໃນຮ່າງຂໍ້ຕົກລົງເຈົ້າແຂວງຄຳມ່ວນ ຈຳ ນວນ 3 ສະບັບ ຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ອະນຸລັກພູຫີນຄັນນາ ເມືອງທ່າແຂກ, ຮ່າງຂໍ້ຕົກລົງວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລັດຖະກອນຄູ ແລະ ນັກຮຽນ ພາຍໃນແຂວງຄຳມ່ວນ; ຈາກນັ້ນ, ກໍໄດ້ມີການປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ.

# ສພຂ ສາລະວັນ ຊ່ວຍເຫຼືອຄອບຄົວທີ່ຖືກຜົນກະທົບຈາກລົມພາຍຸພັດແຮງ



(ສພຂ) - ວັນທີ 11 ເມສາຜ່ານມາ, ທ່ານ ສີເຮັງ ຫອມສິມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ພ້ອມດ້ວຍຄະນະໄດ້ໄປຢ້ຽມຢາມແລະກຳລັງໃຈຄອບຄົວທີ່ປະສົບໄພຈາກລົມພາຍຸພັດແຮງ ໃນຄ່ຳຄືນຂອງວັນທີ 9 ເມສາ ຢູ່ 2 ບ້ານຂອງເມືອງລະຄອນເພັງ ຄື: ນາທົ່ມເໜືອແລະນາທົ່ມໃຕ້ ໂດຍການຕ້ອນຮັບຂອງທ່ານ ໄຊຊະນະ ສີສະຫວັດຮອງເລຂາພັກເມືອງ, ວ່າການເຈົ້າເມືອງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງເມືອງ, ຫ້ອງການ-ຂະແໜງການທີ່ກ່ຽວຂ້ອງຂອງເມືອງ, ອຳນາດການປົກຄອງ ແລະ ປະຊາຊົນໃນ 2 ບ້ານ.

ໃນການເຄື່ອນໄຫວ ໄດ້ລົງເບິ່ງສະພາບຄວາມເສຍຫາຍ ແລະ ຮັບຟັງການລາຍງານຜົນເສຍຫາຍຕົວຈິງ ຈາກຕາງໜ້າອົງການປົກຄອງທັງ 2 ບ້ານ ເຊິ່ງບ້ານນາທົ່ມເໜືອ ໄດ້ຮັບຜົນກະທົບ 13 ຄອບຄົວ, ຫຼັງຄາເຮືອນເສຍຫາຍ 12 ຫຼັງ ເສຍຫາຍໜັກ 9 ຫຼັງ, ເລົ້າເຂົ້າ 3 ຫຼັງ ແລະ ຖຽງນາ 1 ຫຼັງ ລວມມູນຄ່າເສຍຫາຍ 115 ລ້ານກີບ; ບ້ານນາທົ່ມໃຕ້ໄດ້ຮັບຜົນກະທົບ 23 ຄອບຄົວ, ຫຼັງຄາເຮືອນເສຍຫາຍ 22 ຫຼັງຄາ ເສຍຫາຍໜັກ 2 ຫຼັງ, ເລົ້າເຂົ້າ 1 ຫຼັງ ແລະ ຖຽງນາ 1 ຫຼັງ ລວມມູນຄ່າເສຍຫາຍ 183 ລ້ານກວ່າກີບ. ຈາກນັ້ນ, ໄດ້ມອບເງິນສົດ 2 ລ້ານກີບ ພ້ອມດ້ວຍເຄື່ອງບໍລິໂພກ ແລະ ອຸປະໂພກ ລວມມູນຄ່າ 10 ລ້ານກີບ ໃຫ້ອົງການປົກຄອງຂອງ 2 ບ້ານ ເພື່ອນຳໄປຊ່ວຍເຫຼືອເພື່ອນຳໄປຊ່ວຍເຫຼືອຄອບຄົວທີ່ໄດ້ຮັບຜົນເສຍຫາຍ.

ວັນທີ 19 ເມສາ, ທ່ານ ສີເຮັງ ຫອມສິມບັດ, ທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານ ສພຂ ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງສາລະວັນ ແລະ ອົງການກາແດງແຂວງ ພ້ອມດ້ວຍຄະນະໄດ້ລົງຢ້ຽມຢາມໃຫ້ກຳລັງໃຈຄອບຄົວທີ່ໄດ້ຮັບຜົນເສຍຫາຍຈາກເຫດການລົມພະຍຸພັດແຮງໃນຕອນແລງຂອງວັນທີ 18 ເມສາ ຢູ່ບ້ານນາໂພນໄຜ່ ເມືອງສາລະວັນ ໂດຍການຕ້ອນຮັບຂອງທ່ານ ຈັນສີລອນ ສີສົມບູນ ກຳມະການພັກແຂວງ, ເລຂາພັກເມືອງ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງ, ພະແນກການທີ່ກ່ຽວຂ້ອງ, ອຳນາດການປົກຄອງ ແລະ ປະຊາຊົນພາຍໃນບ້ານ; ການເຄື່ອນໄຫວຄັ້ງນີ້ຍັງໄດ້ມອບເງິນສົດ 3 ລ້ານກີບ ພ້ອມດ້ວຍເຄື່ອງບໍລິໂພກ ແລະ ອຸປະໂພກ ລວມມູນຄ່າ 19.8 ລ້ານກີບ.

ບ້ານນາໂພນໄຜ່ ໄດ້ຮັບຜົນກະທົບ 97 ຄອບຄົວ, ເຮືອນປະຊາຊົນຖືກລົມພັດເສຍຫາຍ 97 ຫຼັງຄາ, ວັດ 1 ຫຼັງ, ເລົ້າເຂົ້າ 1 ຫຼັງ ລວມມູນຄ່າເສຍຫາຍເບື້ອງຕົ້ນ 2,464,500,000 ກີບ.

ຕອນບ່າຍວັນທີ 25 ເມສາ, ທ່ານ ສີເຮັງ ຫອມສິມບັດ ພ້ອມດ້ວຍສສຂປະຈຳເຂດເລືອກຕັ້ງເມືອງສາລະວັນ ແລະ ອົງການເກັບກູ້ລະເບີດປະຈຳແຂວງ ໄດ້ເຄື່ອນໄຫວຕິດຕາມ, ຢ້ຽມຢາມຖາມຂ່າວໃຫ້ກຳລັງໃຈ ແລະ ມອບເຄື່ອງຊ່ວຍເຫຼືອເປັນສັງກະສີ 150 ແຜ່ນ, ຕະປູ 33 ກັບ ແລະ ເງິນສົດ 3 ລ້ານກີບ ລວມມູນຄ່າ 8 ລ້ານກີບ ໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກລົມພາຍຸພັດເຂົ້າເຂດບ້ານໜອງຝັ່ງຢອງ ແລະ ບ້ານແກ້ງສົມ ເມືອງສາລະວັນ ໃນຄັ້ງວັນທີ 23 ເມສາ ເຫດເກີດຂຶ້ນເວລາປະມານ 3-4 ໂມງເຊົ້າ ແລະ ວັນທີ 24 ເມສາ ເຫດເກີດຂຶ້ນເວລາປະມານ 15:15 ໂມງ ເຊິ່ງເຮັດໃຫ້ເຮືອນປະຊາຊົນສອງບ້ານເປ່ເພເສຍຫາຍ 23 ຫຼັງ ມີ 29 ຄອບຄົວ, ເລົ້າເຂົ້າ 5 ຫຼັງ ແລະ ຖຽງນາ 1 ຫຼັງ ລວມມູນຄ່າເສຍຫາຍ 114 ລ້ານກວ່າກີບ.

ທ່ານ ທ່ານ ສີເຮັງ ຫອມສິມບັດ ໄດ້ໂອ້ລົມຊຸກຍູ້ໃຫ້ກຳລັງໃຈ ທັງສະແດງຄວາມເສຍໃຈ, ເປັນຫ່ວງເປັນໄຍແລະເຫັນໃຈຕໍ່ຄອບຄົວທີ່ໄດ້ຮັບຜົນກະທົບ ພ້ອມທັງຮຽກຮ້ອງໃຫ້ປະຊາຊົນພາຍໃນບ້ານ ຈົ່ງພ້ອມກັນຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ມີສະຕິລະວັງຕໍ່ສະພາບດິນຟ້າອາກາດ, ກວດກາສະພາບສິ່ງປຸກສ້າງໃຫ້ມີຄວາມແໜ້ນໜາ.

**(ຈັນທີ ດວງປັນຍາ, ດີລຳພົນ ພົມມະຈັນ)**

# ສຳມະນາການສ້າງ, ປັບປຸງ, ໂຄສະນາ ແລະ ປະເມີນການປະຕິບັດນິຕິກຳ




(ສພຂ) - ວັນທີ 23-25 ເມສາຜ່ານມາທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການສ້າງ, ການປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການໂຄສະນາເຜີຍແຜ່, ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ຮອງເລຂາຄະນະບໍລິຫານພັກແຂວງ, ປະທານສະພາປະຊາຊົນແຂວງ, ທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ເຂົ້າຮ່ວມເປັນວິທະຍາກອນ, ມີບັນດາທ່ານຮອງປະທານ ແລະ ຄະນະປະຈຳ ສພຂ, ບັນດາພະແນກການອ້ອມຂ້າງແຂວງ, ວິທະຍາກອນຈາກສູນກາງ/ແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 59 ທ່ານ, ຍິງ 11 ທ່ານ; ຈຸດປະສົງເພື່ອຊຸກຍູ້ວຽກງານການສ້າງ, ການປັບປຸງ, ການຈັດຕັ້ງປະຕິບັດ, ການປະເມີນ ແລະ ຕິດຕາມກວດກາການປະເມີນນິຕິກຳໃຕ້ກົດໝາຍຂອງອົງການປົກຄອງຂັ້ນແຂວງ ແລະ ອົງການທຽບເທົ່າ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ດ້ານນິ ຕິບັນຍັດ, ດ້ານນິຕິກຳຂອງສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຮັບຟັງການນຳສະເໜີເນື້ອໃນເອກະສານ 10 ບົດຄື: 1) ບົດຮຽນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂອງແຂວງ; 2) ການສ້າງ ແລະ ປັບປຸງ ຂໍ້ຕົກລົງເຈົ້າແຂວງ ໃນໄລຍະຜ່ານມາ; 3) ຄູ່ມືກ່ຽວກັບການສ້າງຂໍ້ຕົກລົງຂອງເຈົ້າແຂວງ; 4) ການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນໄລຍະຜ່ານມາ ແລະ ຜ່ານດຳລັດຂອງລັດຖະບານ ສະບັບເລກທີ 562/ລບ, ລົງວັນທີ 6 ພະຈິກ 2020; 5) ການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ເຕັກນິກການສ້າງບົດໂຄສະນາ ແລະ ການເລືອກເຟັ້ນເນື້ອໃນທີ່ຈະໂຄສະນາຂອງສະພາແຫ່ງຊາດ; 6) ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຂອງສະພາແຫ່ງຊາດ; 7) ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ແລະ ທິດທາງແຜນການໃນຕໍ່ໜ້າ; 8) ຄຳແນະນຳຄູ່ມືວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ; 9) ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງ-ນຳໃຊ້ທີ່ດິນກະສິກຳຢູ່ແຂວງຄຳມ່ວນສະບັບເລກທີ 333/ຈຂ.ຄມ, ລົງວັນທີ 3 ມີນາ 2020 ແລະ ບົດລາຍງານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ ສະບັບເລກທີ 333/ຈຂ.ຄມ, ລົງວັນທີ 3 ມີນາ 2020; 10) ການກຳນົດຫົວຂໍ້ນິຕິກຳເພື່ອສະເໜີເຂົ້າແຜນການສ້າງ, ປັບປຸງ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຕ່ປີ 2026-2030. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນ ພ້ອມທັງຈັດແບ່ງກຸ່ມຄົ້ນຄວ້າເພື່ອຍົກສູງຄວາມຮັບຜິດຊອບ ໂດຍສຸມໃສ່ການຕັ້ງຄຳຖາມສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນໃນແຕ່ລະຫົວຂໍ້.

ທ່ານບຸນມີພົມມະສອນ ໄດ້ມີຄຳເຫັນວ່າ: ກອງປະຊຸມສຳມະນາຄັ້ງນີ້ແມ່ນການຖ່າຍທອດທັກສະຄວາມຮູ້, ຄວາມສາມາດ ແລະ ປະສົບການຕ່າງໆ ດ້ານນິຕິກຳຂອງບັນດາວິທະຍາກອນ, ພ້ອມທັງເຊື່ອໝັ້ນວ່າ ບັນດາຜູ້ເຂົ້າຮ່ວມຈະນຳເອົາເນື້ອໃນຈິດໃຈ ແລະ ບົດຮຽນປະສົບການຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ມີຜົນເປັນຮູບປະທຳໃນວຽກງານຕົວຈິງ ແລະ ເປັນປະໂຫຍດສູງສຸດ.

**(ເອື້ອ ມະໂນສິງ)**




# ຂໍ້ຄິດປີໃໝ່ລາວ 2025

**# ດັ້ນກົບເມກ**

ບຸນປີໃໝ່ລາວປີ 2025 ນີ້ ກົງກັບວັນທີ 14 ເດືອນເມສາແຮມ 2 ຄໍ່າເດືອນ 5 (ລາວ) ເປັນມື້ສັງຂານລ່ວງ ຖືກວັນຈັນ, ວັນຄານທີ 15 ເມສາ ເປັນມື້ເນົາ ຖືກມື້ແຮມ 3 ຄໍ່າ ເດືອນ 5 ລາວ ແລະ ວັນທີ 16 ເມສາ ເປັນມື້ສັງຂານຂຶ້ນປີໃໝ່; ປີໃໝ່ລາວຕາມໜັງສືຮີດສິບສອງ ຂອງ ສີລາ ວີລະວົງ ແລະ ໜັງສືຂະໜົບທຳນຽມ, ຮີດ 12 ຄອງ 14 ຂອງ ຄຳບາງ ຈັນນິຍາວົງ ໄດ້ໃຫ້ເຫດຜົນໜ້າຄິດບາງປະການ ເຊິ່ງທັງສອງແຫຼ່ງຂໍ້ມູນ ແມ່ນອີງໃສ່ລະດູການດິນຟ້າອາກາດປ່ຽນແປງໄປຕາມກົດເກນທຳມະຊາດ.

ໜັງສືຂອງສີລາວີລະວົງຂຽນວ່າເລື່ອງປີໃໝ່ລາວ ແມ່ນອີງໃສ່ພົວພັນກັບປີໃໝ່ ມອນ-ພະມ້າ ແລະ ຂະເໝນ ເຊິ່ງເວົ້າພາສາປັດຈຸບັນກໍແມ່ນວັດທະນະທຳຮ່ວມ ແລະ ອີງໃສ່ການໄລ່ມື້ວັນເດືອນປີແບບບູຮານຕາມຫຼັກ ໂຫລາສາດ; ໜັງສືທັງ 2 ສະບັບ ຕ່າງກໍອ້າງອີງນິທານແບບດຽວກັນຄືເລື່ອງ: ທ້າວ ທຳມະບານ ທີ່ແຂ່ງທວາຍກັນກັບ ກະບິນລະພົມ ແຕ່ສຸດທ້າຍ ທ້າວທຳມະບານ ເປັນຜູ້ຊະນະ ເຊິ່ງຫົວໃຈໃນຄຳທວາຍມີພຽງ 3 ຄຳຖາມ 3 ຄຳຕອບຄື: ຕອນເຊົ້າລາສີຢູ່ໜ້າຕື່ນມາຕ້ອງຮັກສາໜ້າຕາໃຫ້ສະອາດ ໃຫ້ໃບໜ້າຍິ້ມແຍ້ມແຈ່ມໃສ, ບໍ່ບູດບຶ້ງແບບໜ້າບໍ່ຮັບແຂກຄືບາງຄົນ; ຕອນທ່ຽງລາສີຢູ່ເອິກ ຄືຫົວໃຈນັ້ນເອງ ຫຼັງຈາກຜ່ານວຽກງານຫຼາຍ ຕ້ອງຮູ້ຈັກບໍລິຫານຈິດໃຈໃຫ້ຊຸ່ມເຢັນ ບໍ່ໃຫ້ອາລົມຮ້ອນ, ຮູ້ຈັກແກ້ບັນຫາດ້ວຍສະຕິບັນຍາດ້ວຍເຫດຜົນ; ຕອນແລງລາສີຢູ່ຕີນ ໝາຍຄວາມວ່າ ຄົນເຮົາເມື່ອໄປວຽກໝົດມື້ກັບມາເຮືອນ ຕ້ອງຮູ້ຈັກອາບນໍ້າທຳຄວາມສະອາດກ່ອນເຂົ້າເຮືອນ-ເຂົ້ານອນ ຫຼືຕີຄວາມໝາຍໄດ້ອີກວ່າຕ້ອງຮູ້ຈັກປັດກວາດເຮືອນຊານ ໃຫ້ສະອາດ ແລະ ຮູ້ຈັກຮັກສາສຸຂະພາບ ຂອງຕົນໃຫ້ແຂງແຮງ.

**ສັງລວມໄດ້ວ່າ:** ບຸນປີໃໝ່ລາວນັ້ນ ໃນອະນາຄົດຫຼາຍສິບປີຂ້າງໜ້າວັນເດືອນປີອາດເຄື່ອນຍ້າຍເທື່ອລະໜ້ອຍ ໄປຕາມລະດູການໝູນຂອງໂລກ ແຕ່ພາກປະຕິບັດສຳຄັນກວ່າ; ໃຫ້ຮູ້ຈັກສົມມາຜູ້ອາວຸໂສ ຂໍພອນຈາກຜູ້ໃຫຍ່ເຖົ້າແກ່, ຜູ້ອາວຸໂສກໍຕ້ອງຮູ້ຈັກສັ່ງສອນເຢົາວະຊົນ ບໍ່ແມ່ນເຖົ້າແກ່ແຕ່ພຽງອາຍຸ, ຮູ້ຈັກທຳຄວາມສະອາດທີ່ຢູ່ອາໄສໃຫ້ຖືກຫຼັກອະນາໄມພາຍໃນບ້ານເຮືອນ, ຮູ້ຈັກເຕົ້າໂຮມຄວາມສາມັກຄີພີ່ນ້ອງໃນວົງຕະກູນ...!




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

- ຕ້ອງອົດທົນສັ່ງສອນຈຶ່ງສາມາດເຊີດຊູເອົາເພື່ອນສະມາ ຊິກຜູ້ຍັງອ່ອນຄວາມສາມາດ, ເພື່ອຊ່ວຍໃຫ້ເຂົາເຈົ້າກ້າວໜ້າໄດ້.
- ຕ້ອງສະຫຼາດສະຫຼຽວຈຶ່ງຈະຫຼີກເວັ້ນບໍ່ໃຫ້ພວກຄົນໂລ ເລມາແວດລ້ອມ ແລະ ເຮັດໃຫ້ຫ່າງໄກຈາກພະນັກງານຜູ້ດີ.
- ຕ້ອງມີທ່າທີມ່ວນຊື່ນສະໜິດສະໜົມ, ເພື່ອນສະມາຊິກ ທັງຫຼາຍຈຶ່ງຈະສາມາດເຂົ້າໃກ້ຊິດກັບເຮົາໄດ້.
- ຈຸດປະສົງຂອງການຊ່າງໃຊ້ພະນັກງານ, ແມ່ນມີຈຸດປະສົງ ທີ່ຈະປະຕິບັດນະໂຍບາຍຂອງພັກ ແລະ ຂອງລັດຖະບານໃຫ້ໄດ້ຢ່າງຄົບຖ້ວນ. ຖ້າພະນັກງານຫາກມີແນວຄິດກະວົນກະວາຍ ຢ້ານ ກົວຫງ່ອມເຫງົາ, ອຸກອັ່ງ ຫຼື ວຽກການບໍ່ເໝາະສົມກັບຄວາມສາມາດກໍ່ບໍ່ສໍາເລັດໄດ້. ເພາະສະນັ້ນຖ້າຢາກໃຫ້ພະນັກງານເຮັດວຽກ ການໄດ້ນັ້ນກໍ່ຕ້ອງເຮັດໃຫ້ເຂົາເຈົ້າອຸ່ນອຽນໃຈເຮັດວຽກ, ມ່ວນຊື່ນເບີກບານເຮັດວຽກ, ຖ້າຢາກເຮັດແນວນັ້ນກໍ່ຕ້ອງປະຕິບັດສິ່ງທີ່ກ່າວ ລຸ່ມນີ້:

ອ່ານຕໍ່ສະບັບໜ້າ...





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສະມາຊິກສະພາແຫ່ງຊາດ ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX; ລາຍງານການກະກຽມຄວາມພ້ອມຂອງຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ຈຳນວນ 8 ສະບັບ ໃນນີ້ ສ້າງໃໝ່ 4 ສະບັບ, ປັບປຸງ 4 ສະບັບ; ລາຍງານການຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ (ສະບັບປັບປຸງ) ທີ່ຜ່ານການຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX; ລາຍງານການກະກຽມບົດລາຍງານກ່ຽວກັບຮ່າງແຜນການສ້າງແລະປັບປຸງກົດໝາຍ 5 ປີ ຂອງ ສພຊ ຊຸດທີ X ແຕ່ປີ 2026-2030; ບົດລາຍງານການຄົ້ນຄວ້າຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພິຈາລະນາຮັບຮອງເອົາການສະເໜີຂອງລັດຖະບານ ກ່ຽວກັບໂຄງການລົງທຶນ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ສະບັບເລກທີ 34/ລບ, ລົງວັນທີ 13/3/2025 ກ່ຽວກັບການສະເໜີຮັບຮອງ ແລະ ຍົກເວັ້ນບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການເຂື່ອນໄຟຟ້ານໍ້າເງິນ 1; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງຜູ້ປະກອບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ້ງໃນໂຄງການພັດທະນາເຂດເສດຖະກິດສະເພາະພູຂຽວ ແຂວງຄຳມ່ວນ ລະຫວ່າງບໍລິສັດ ຢຸນນານອີ້ຜູ້ອະສັງຫາລິມະຊັບ ຈຳກັດຜູ້ດຽວ ແລະ ກຸ່ມບໍລິສັດ ເອັສວີກຣຸບ ຈຳກັດ; ລາຍງານຜົນການຕິດຕາມກວດກາບັນດາໂຄງການຕາຝັ່ງເຈືອນນໍ້າເຫືອງ ລຽບຊາຍແດນລາວ-ໄທ ຢູ່ເມືອງບໍ່ແຕນ ແລະເມືອງແກ່ນທ້າວແຂວງໄຊຍະບູລີ; ລາຍງານກ່ຽວກັບການຈັດສັນງົບປະມານບ້ວງກອງທຶນທາງ ປະຈຳປີ 2025 ແລະ ລາຍງານກ່ຽວກັບຜົນກອງປະຊຸມປຶກສາຫາລືການປັບປຸງແຜນຜັງເມືອງສະບັບທີ 3 ແລະ ການປຸກສ້າງໂຮງແຮມ ໂກເດັນໂກຣບ.

ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດແລະນຳຜົນປະໂຫຍດລວມມາສູ່ປະເທດຊາດແລະປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະປະກິດ)**

## ສະຫາຍ...

(ຕໍ່ຈາກໜ້າ 1)

ວັນທີ 21 ເມສາ, ສະຫາຍ ພທ. ສຸວອນ ເລືອງບຸນມີ ໄດ້ພົບປະເຮັດວຽກ ແລະ ປຶກສາຫາລືກັບຝ່າຍຫວຽດນາມ ນຳໂດຍສະຫາຍ ເຈິ່ນ ກວາງ ເຟືອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ, ສະໜິດສະໜົມຖານສະຫາຍອ້າຍນ້ອງ. ຈຸດປະສົງຂອງການໄປຢ້ຽມຢາມຄັ້ງນີ້ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງສະພາແຫ່ງຊາດລາວແລະສະພາແຫ່ງຊາດຫວຽດນາມ; ເພື່ອຜັນຂະຫຍາຍບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດ ລາວ-ຫວຽດນາມ ແລະ ເພື່ອປະຕິບັດຕາມຜົນຂອງການພົບປະລະຫວ່າງສະຫາຍຮອງປະທານສະພາແຫ່ງລາວ ແລະ ຮອງປະທານສະພາແຫ່ງຊາດຫວຽດນາມ ໃນເດືອນຕຸລາ 2024 ໃນການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ, ຮ່ວມກັນຕິດຕາມກວດກາແລະຊຸກຍູ້ການຮັກສາຄວາມສະຫງົບຊາຍແດນ, ແກ້ໄຂຄວາມຫຍຸ້ງຍາກຂອງປະຊາຊົນໃນເຂດຫ່າງໄກທຸລະກັນດານ, ການກໍ່ສ້າງພື້ນຖານໂຄງລ່າງ ແລະການພັດທະນາຊົນນະບົດ.

ໃນວັນດຽວກັນ, ສະຫາຍ ພທ. ສຸວອນ ເລືອງບຸນມີ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ເຈິ່ນ ແທັງ ເໝິນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ເຊິ່ງສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ; ຕີລາຄາສູງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ກໍຄືປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ທີ່ນັບມື້ແຕກດອກອອກຜົນຍິ່ງຂຶ້ນ. ພ້ອມນີ້, ສະຫາຍປະທານສະພາແຫ່ງຊາດຫວຽດນາມ ຍັງໄດ້ໃຫ້ທິດຊີ້ນຳໃນການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງອົງການນິຕິບັນຍັດຂອງສອງປະເທດ ຕາມບົດບັນທຶກຂອງສອງສະພາແຫ່ງຊາດໄດ້ລົງນາມຮ່ວມກັນ; ເພີ່ມທະວີການຮ່ວມມືໃຫ້ເລິກເຊິ່ງກວ່າເກົ່າ, ຮ່ວມກັນຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆ ທີ່ສອງປະເທດໄດ້ລົງນາມຮ່ວມກັນ ໂດຍສະເພາະຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ຊ່ວຍເຫຼືອເພື່ອການພັດທະນາ, ຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຫ່າງໄກທຸລະກັນດານ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການພັດທະນາຕາມບໍລິເວນຊາຍແດນຂອງສອງປະເທດ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ວັນທີ 22-25 ເມສາ, ຄະນະຜູ້ແທນສະພາແຫ່ງຊາດລາວໄດ້ເດີນທາງໄປຢ້ຽມຢາມແຂວງເຊີນລາ ແລະ ແຂວງດຽນບຽນ ເຊິ່ງໄດ້ພົບປະເຮັດວຽກກັບຄະນະພັກ, ຄະນະນຳ ກໍຄືສະພາປະຊາຊົນຂອງສອງແຂວງ ໂດຍໄດ້ປຶກສາຫາລື, ຕິດຕາມກວດກາການປະຕິບັດບັນດາໂຄງການພັດທະນາຊົນນະບົດເຂດຫ່າງໄກສອກຫຼີກຕາມບໍລິເວນຊາຍແດນລາວ-ຫວຽດນາມ ແລະ ຮັບຟັງການລາຍງານການພັດທະນາເສດຖະກິດ-ສັງຄົມຂອງແຂວງ; ນອກຈາກນັ້ນ, ຍັງໄດ້ທ່ຽວຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດຈຳນວນໜຶ່ງຂອງແຂວງດຽນບຽນ.

ນອກຈາກນັ້ນ, ຄະນະຜູ້ແທນລາວ ໄດ້ມີໂອກາດພົບປະຢ້ຽມຢາມພະນັກງານສະຖານເອກອັກຄະລັດຖະທູດລາວ ປະຈຳ ສສ.ຫວຽດນາມ ໂດຍສະຫາຍຮອງປະທານສະພາແຫ່ງຊາດໄດ້ແຈ້ງສະພາບການສະດວກ ແລະ ຫຍຸ້ງຍາກ ຂອງ ສປປລາວ ໃນປັດຈຸບັນ.



## ສຸຂະພາບທາງໂຣຄ

# ປະໂຫຍດຂອງໝາກຂາມປ້ອມ

# ຮຽບຮຽງໂດຍ: ດອກໄມ້ປ່າ



ໝາກຂາມປ້ອມ ນອກຈາກຈະເປັນໝາກໄມ້ແລ້ວ ຍັງຖືກຈັດເປັນສະໝຸນໄພພື້ນບ້ານອີກຊະນິດໜຶ່ງ ທີ່ມີປະສິດທິພາບໃນການແກ້ໄອ, ມີວິຕາມິນຊີສູງ ແລະ ຍັງຊ່ວຍຕໍ່ຕ້ານອະນຸມູນອິດສະຫຼະອີກດ້ວຍ ເຊິ່ງປະໂຫຍດຂອງໝາກຂາມປ້ອມມີດັ່ງນີ້:

- ຊ່ວຍບັນເທົາອາການເຈັບຄໍ, ໄອແລະລະລາຍຂີ້ກະເທີ່
- ຊ່ວຍໃຫ້ຊຸ່ມຄໍ
- ບັນເທົາອາການຄັນຄໍ
- ເປັນສ່ວນປະກອບສຳຄັນໃນການຮັກສາ ແລະ ປ້ອງກັນໄຂ້ຫວັດໃຫຍ່.

ນອກຈາກນີ້, ສ່ວນຕ່າງໆຂອງຕົ້ນໝາກຂາມປ້ອມຍັງມີຄຸນປະໂຫຍດທີ່ສຳຄັນ ໂດຍສະເພາະແຮ່ທາດຫຼາຍຊະນິດທີ່ຈຳເປັນຕໍ່ຮ່າງກາຍ; ດັ່ງນັ້ນ, ຈຶ່ງຖືກນຳມາເປັນສ່ວນປະກອບສຳຄັນໃນການຮັກສາພະຍາດອື່ນໆອີກດ້ວຍ.

# ຜັກກູດ ຜັກພື້ນບ້ານທີ່ບໍ່ຄວນເບິ່ງຂ້າມ



# ຮຽບຮຽງໂດຍ: ທິວກະທິ

ເມື່ອເວົ້າເຖິງຜັກກູດເຊື່ອວ່າຫຼາຍຄົນຄົງບໍ່ມີໃຜບໍ່ຮູ້ຜັກກູດ ເພາະຜັກກູດຖືເປັນພືດຊະນິດໜຶ່ງ ເຊິ່ງສາມາດນຳມາປຸງເປັນອາຫານໄດ້ແລະຍັງເປັນຜັກພື້ນບ້ານທີ່ມີປະໂຫຍດນຳອີກ ໂດຍມັກນິຍົມນຳຍອດອ່ອນ ແລະ ໃບອ່ອນມາປຸງອາຫານຫຼືລວກກິນກັບແຈ່ວ. ສຳລັບພືດຊະນິດນີ້ມັກຂຶ້ນຢູ່ຕາມບໍລິເວນທີ່ລຸ່ມນ້ຳ, ແຄມຫ້ວຍ, ໜອງ ແລະ ບຶງ ຫຼື ໃນພື້ນທີ່ເປີດໂລ່ງ ຍິ່ງໃນຊ່ວງໜ້າແລ້ງ ຜັກກູດຈະມີລົດຊາດແຊບກວ່າລະດູອື່ນໆ ຜັກກູດຈະມີລົດຈືດອົມຫວານ-ກອບ ເປັນຜັກທີ່ມີເສັ້ນໃຍກາກຫຼາຍ ເຮັດໃຫ້ລະບົບຂັບຖ່າຍດີ. ນອກຈາກນີ້, ຍັງມີວິຕາມິນເອ, ວິຕາມິນບີ 1, ວິຕາມິນບີ 2, ວິຕາມິນຊີ ແລະ ໄນອາຊິນ ຂ້ອນຂ້າງສູງ ນຳມາລວກ ຫຼື ຕົ້ມໃຫ້ສຸກໃຊ້ເປັນຜັກກິນກັບແຈ່ວປະເພດຕ່າງໆ ຫຼື ນຳໄປປຸງອາຫານໄດ້ຫຼາຍຢ່າງ ແລະຍັງມີຄຸນປະໂຫຍດອີກຫຼວງຫຼາຍ ດັ່ງນີ້:

1. ຊ່ວຍເພີ່ມພູມຄຸ້ມກັນ ແລະ ຊ່ວຍຕໍ່ຕ້ານອະນຸມູນອິດສະຫຼະ
2. ນຳຜັກກູດມາຕົ້ມແລ້ວດື່ມ ຈະຊ່ວຍແກ້ໄຂ້ຕົວຮ້ອນໄດ້
3. ເປັນຜັກທີ່ມີຄຸນສົມບັດຊ່ວຍດັບຮ້ອນ
4. ຊ່ວຍຫຼຸດລະດັບຄໍເລດເຕີຣອນໃນເມັດເລືອດ
5. ອຸດົມໄປດ້ວຍທາດເຫຼັກ ແລະ ບີຕາແຄໂຣທີນ
6. ຊ່ວຍແກ້ພະຍາດເລືອດຈາງ
7. ຊ່ວຍບຳລຸງສາຍຕາ
8. ຊ່ວຍໃນລະບົບຂັບຖ່າຍ ເພາະເປັນຜັກທີ່ມີເສັ້ນໃຍສູງຫຼາຍ.

ສິ່ງທີ່ຄວນລະວັງ: ບໍ່ຄວນຮັບປະທານຜັກກູດແບບດິບໆ ຫຼື ແບບສົດໆ ໃນປະລິມານທີ່ຫຼາຍເກີນໄປ ເນື່ອງຈາກຜັກກູດມີສານອອກຊາເລດໃນປະລິມານທີ່ສູງ.

**ແຫຼ່ງຂໍ້ມູນ: Laos Health**




# ກຳມະກອນສ້າງຊາດ

# ຫຼານເຈົ້ານ້ອຍ

❊ ອ້າຍນີ້ມີຊື່ຊັ້ນ
ເຮັດວຽກຕາມແຄມທາງ
ກາງຄືນນອນໃນເຕັ້ນ
ອາບເຫື່ອປອນປຽກເປື້ອນ

ນາມວ່າກຳມະກອນ
ບ່ອນສະຖານປຸກສ້າງ
ກາງເວັນສູນສ່ອງ
ບິນເສື້ອກິ່ນກຸຍ

❊ ຕາກແດດກາຍກ່ຳໄໝ້
ແມ່ນຟ້າຝົນຊິນລະທາ
ຈັກແມ່ນໜາວ ຫຼື ຮ້ອນ
ຊາຍສະກັນຢ່າງຂ້າ

ໃຈບໍ່ຄອນແຄນ
ຖອກລົງເທພື້ນ
ໃຈຮຽມມິໄຫວຫວັ່ນ
ຂໍທ້າແດດຝົນ

❊ ບໍ່ກົວຄົນວ່າເວົ້າ
ວັນໆຂໍພຽງມີ
ຈະແມ່ນທາງ ຫຼື ບ້ານ
ມີໜ້າຊາຍຢ່າງຂ້ອຍ

ດູຖູກປະນາມຂວັນ
ວຽກງານການສ້າງ
ເຮືອນຊານສະຖານທີ່
ກຽມພ້ອມພ່ຳກະທຳ ເພື່ອນເອີຍ!

❊ ບໍ່ເອີຍຄຳວ່າເວົ້າ
ໃຜຈະແນມເປັນຄົນ
ວຽກໜັກງານໜາຕ້ອງ
ຂໍພຽງປະເທດບ້ານ

ຈາຈົ່ມງຶມແງມ
ຕ່ຳສະກຸນຊາວເຊື້ອ
ໃຈອາສາຍອມສ່ຽງ
ຈະເລີນໄດ້ດັ່ງຫວັງ

❊ ພະລັງກາຍໃຈພຽບພ້ອມ
ເພື່ອພັດທະນາລາວເຮົາ
ຂ້າຂໍຍອມຍໍມ້ວນ
ໃຫ້ແຜ່ນດິນແມ່ຂ້ອຍ

ກຽມແຂ່ງຂັນອາສາ
ຮຸ່ງຈະເລີນເມືອໜ້າ
ຊີວິດຖະຫວາຍມອບ
ແດນນີ້ຕະຫຼອດໄປ

❊ 1 ພຶດສະພາ ວ່າໄວ້
ຮຽມຂໍອວຍພອນໄຊ
ກຳມະກອນເໜືອໃຕ້
ໃຫ້ແຂງແຮງທົ່ວໜ້າ ກຽມພ້ອມພັດທະນາຊາດໃຫ້

ວັນແຫ່ງກຳມະກອນ
ແດ່ຊົນຊາວເຊື້ອ
ແດນໃດກໍຕາມແຕ່
ຈະເລີນກ້າວລື່ນຫລັງ ທ່ານເອີຍ!



## ຝາກຝາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ຕາມ**ການເປີດເຜີຍຂອງກົມຕຳຫຼວດຈະລາຈອນ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນປະເທດ ວ່າອຸບັດເຫດໃນຊ່ວງປີໃໝ່ລາວ ໄລຍະ 7 ວັນອັນຕະລາຍ ທົ່ວປະເທດມີເຖິງ **313 ຄັ້ງ** ເຮັດໃຫ້ມີຜູ້ເສຍຊີວິດເຖິງ **26 ຄົນ ພຸດທະ!** ອັນວ່າເຫດຮ້າຍ ລັບລີ້ບໍ່ລະວັງ ທັງດື່ມສິ່ງມຶນເມົາ ແລ່ນໄວອາຟ້າວ ມີແຕ່ເອົາຄວາມສູນສິ້ນ ຊັບສິນຫຼາຍຢ່າງ ຈົ່ງລະວັງແດ່ທ້ອນ ຜ່ອນຄັນເລັ່ງແລ່ນຊ້າ ກໍຮອດໄດ້ດັ່ງປະສົງ **ທ່ານເອີຍ!**

❊ **ຊົມ**ເຊີຍວັນກຳມະກອນສາກົນທີ່ຈະໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ຄົບຮອບ **139 ປີ** ທີ່ກຳມະກອນໄດ້ ມີປະຊາທິປະໄຕເຕັມຮ້ອຍ ສິດເສລີເຕັມສ່ວນ ມອບປະຊາທົ່ວດ້າວ ຈະເລີນກ້າວລື່ນຫຼັງ ຟັງຍິນສຽງແຊວໂຮ່ຮ້ອງ ດຸດັ່ງປາງບຸນ ໂຮມຊຸມນຸມຢ່າງເພື່ອສຸຂະພາບ ລະລຶກຄືນຜົນງານໄວ້ ສະມາຊິກກຳມະບານສະພາແຫ່ງຊາດກໍໄດ້ ໂຮມໃຈກັບເຂົ້າຮ່ວມ ລວມເຖິງການແຂ່ງຂັນກິດຈະກຳບັ້ນຮ່ວມກັນ **ເຈົ້າເອີຍ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ບໍ່ໄຫວດອກລູກ

ມີນັກທ່ອງທ່ຽວກຸ່ມໜຶ່ງ ເປັນໄວຊະລາ ນັ່ງລົດເມໄປທ່ຽວ ແລ້ວສົ່ງແກ່ນຖົ່ວດິບ ແລະ ແກ່ນອາວມອນ ໃຫ້ຄົນຂັບລົດກິນຕະຫຼອດທາງ, ຈົນຄົນຂັບລົດຮູ້ສຶກເກງໃຈ ຄົນຂັບລົດຈຶ່ງຖາມວ່າ:

"ແລ້ວຊຸມແມ່ຕູ້ບໍ່ກິນບໍ່ ຄືເອົາມາໃຫ້ຂ້ອຍກິນຕະຫຼອດແທ້"

ແມ່ຕູ້ຈຶ່ງຕອບໄປວ່າ: "ພວກຂ້ອຍອົມກິນແຕ່ຊັອກໂກແລັດທີ່ຫຸ້ມໝາກຖົ່ວດິບ, ສ່ວນທາງດ້ານໃນພວກເຮົາຫຍ້າບໍ່ໄຫວດອກລູກເອີຍ"

!!!!!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ເວົ້ານ້ອຍເຂົາກະດ່າ ວ່າຫຼາຍເຂົາກະເວົ້າ
ເຮົາຢູ່ຊື່ໆເຂົາກະນິນທາ ຂະໜາດຝົນຢູ່ເທິງຟ້າ
ຍັງມີບ່ອນໃຫ້ຄົນຊັງ

ຂ່າວສະພາຕ່າງປະເທດ

# ສິງກະໂປ ຈະຈັດການເລືອກຕັ້ງທົ່ວໄປໃນວັນທີ 3 ພຶດສະພານີ້

(Xinhua) - ຂະນະທີ່ຊາວສິງກະໂປກຽມໄປລົງຄະແນນສຽງໃນວັນທີ 3 ພຶດສະພານີ້, ນາຍົກລັດຖະມົນຕີ ລໍ ເຣນ ຫວອງ (Lawrence Wong) ກ່າວເມື່ອວັນອັງຄານທີ 15 ເມສາຜ່ານມາວ່າ "ຊາວສິງກະໂປຄວນຕັດສິນໃຈເລືອກທີມທີ່ຈະນໍາພາປະເທດ" ໃນໄລຍະເວລາສໍາຄັນນີ້; ຫວອງ ກ່າວໃນເຟສບຸກວ່າ "ເງື່ອນໄຂລະດັບໂລກທີ່ເຮັດໃຫ້ສິງກະໂປປະສົບຜົນສໍາເລັດໃນຫຼາຍທົດສະວັດທີ່ຜ່ານມາ ອາດຈະບໍ່ສາມາດຄົງຢູ່ອີກຕໍ່ໄປ" ແລະ ເສີມວ່າ: ນີ້ແມ່ນເຫດຜົນທີ່ຕົນປະກາດໃຫ້ມີການເລືອກຕັ້ງທົ່ວໄປ.

ກ່ອນໜ້ານັ້ນໃນວັນດຽວກັນ, ຫວອງ ໄດ້ແນະນໍາໃຫ້ປະທານາທິບໍດີ ທາມັນ ຊານມູກາຣັດນໍາ (Tharman Shanmugaratnam) ຍຸບລັດຖະສະພາເພື່ອເລີ່ມຂະບວນການເລືອກຕັ້ງຢ່າງເປັນທາງການ.

ວັນສະເໜີຊື່ໄດ້ຈັດຂຶ້ນເມື່ອວັນທີ 23 ເມສາ, ເມື່ອພັກການເມືອງຕ່າງໆ ໄດ້ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງຂັ້ນສຸດທ້າຍໃນ 33 ເຂດເລືອກຕັ້ງທົ່ວປະເທດ; ຜູ້ມີສິດເລືອກຕັ້ງຈະລົງຄະແນນສຽງໃຫ້ຜູ້ສະໝັກລາຍບຸກຄົນ ຫຼື ກຸ່ມຜູ້ສະໝັກທີ່ລົງສະໝັກເປັນຕົວແທນເຂດເລືອກຕັ້ງຂອງຕົນ.

ຫຼັງຈາກວັນສະເໜີຊື່ ກໍມີການອະນຸຍາດໃຫ້ໂຄສະນາຫາສຽງໄດ້ 9 ວັນ ລວມທັງການໂຮມຊຸມນຸມ, ການໄປຢ້ຽມຢາມເຮືອນ, ການແຈກຢາຍແຜ່ນພັບ, ການຕິດປ້າຍໂຄສະນາແລະການໂຄສະນາທາງການເມືອງທາງອິນເຕີເນັດ; ການໂຄສະນາຫາສຽງຈະຖືກຫ້າມໃນວັນທີ 2 ພຶດສະພາເຊິ່ງເປັນວັນພັກຜ່ອນສໍາລັບຜູ້ມີສິດເລືອກຕັ້ງ ເພື່ອສະທ້ອນບັນຫາທີ່ຖືກຍົກຂຶ້ນ.

ພັກກິດປະຊາຊົນ (People's Action Party - PAP) ເຊິ່ງປົກຄອງສິງກະໂປເປັນເວລາ 60 ປີ ໄດ້ຮັບຄະແນນສຽງ 61.24% ໃນການເລືອກຕັ້ງທົ່ວໄປປີ 2020 ທຽບກັບ 69.86% ໃນປີ 2015; ພັກແຮງງານ ເຊິ່ງເປັນພັກຝ່າຍຄ້ານພຽງພັກດຽວທີ່ໄດ້ຮັບທີ່ນັ່ງໃນປີ 2020 ໄດ້ເພີ່ມຈໍານວນຜູ້ແທນໃນລັດຖະສະພາ ຈາກ 6 ທີ່ນັ່ງ ໃນປີ 2015 ເປັນ 10 ທີ່ນັ່ງ ໃນປີ 2020.

ການເລືອກຕັ້ງຄັ້ງນີ້ ມີຂຶ້ນໃນທ່າມກາງຄວາມເປັນຫ່ວງທີ່ເພີ່ມຂຶ້ນກ່ຽວກັບຄວາມເຄັ່ງຕຶງດ້ານການຄ້າທົ່ວໂລກ, ຜູ້ນໍາລະດັບສູງຂອງສິງກະໂປ ລວມທັງ ຫວອງ ໄດ້ເຕືອນເມື່ອບໍ່ດົນມານີ້ວ່າອັດຕາພາສີໃໝ່ຂອງສະຫະລັດ ອາດຈະສົ່ງຜົນກະທົບຕໍ່ການຄ້າເສລີໃນທົ່ວໂລກ ແລະ ເປັນໄພຂົ່ມຂູ່ຕໍ່ເສດຖະກິດຂະໜາດນ້ອຍທີ່ເປີດກວ້າງຄືສິງກະໂປ.



# ສະພາແຫ່ງຊາດບຣາຊິນ ຜ່ານຮ່າງກົດໝາຍການຄ້າລະຫວ່າງປະເທດທ່າມກາງການເກັບພາສີໃໝ່ຂອງທຣໍາ




(Xinhua) - ວັນພຸດທີ 2 ເມສາຜ່ານມາ, ສະພາແຫ່ງຊາດບຣາຊິນ ໄດ້ຜ່ານຮ່າງກົດໝາຍທີ່ຈະອະນຸຍາດໃຫ້ລັດຖະບານວາງມາດຕະການທາງການຄ້າ ແລະ ສິ່ງແວດລ້ອມຮ່ວມກັນ ຕໍ່ຂໍ້ຈໍາກັດຂອງຕ່າງປະເທດ, ພຽງບໍ່ເທົ່າໃດຊົ່ວໂມງຫຼັງຈາກປະທານາທິບໍດີ ໂດນັລ ທຣໍາ ຂອງສະຫະລັດ ປະກາດເກັບພາສີໃໝ່ 10% ຕໍ່ສິນຄ້ານໍາເຂົ້າທັງໝົດຈາກບຣາຊິນ.

ຮ່າງກົດໝາຍດັ່ງກ່າວໄດ້ຮັບການຮັບຮອງເອົາໃນສະພາຜູ້ແທນປະຊາຊົນໜຶ່ງວັນຫຼັງຈາກຜ່ານການອະນຸມັດຈາກສະພາສູງ ເຊິ່ງໄດ້ຖືກເລັ່ງລັດຜ່ານທັງສອງສະພາດ້ວຍການສະໜັບສະໜູນຈາກສະມາຊິກສະພາແຫ່ງຊາດຈາກທຸກຝ່າຍການເມືອງ; ຮ່າງກົດໝາຍສະບັບນີ້ ຮ່າງຂຶ້ນເພື່ອຕອບໂຕ້ຕໍ່ກົດລະບຽບການຄ້າສິ່ງແວດລ້ອມຝ່າຍດຽວຂອງສະຫະພາບເອີຣົບ, ຕໍ່ມາ ໄດ້ຂະຫຍາຍຂອບເຂດກົດໝາຍດັ່ງກ່າວທ່າມກາງຄວາມເປັນຫ່ວງທີ່ເພີ່ມຂຶ້ນກ່ຽວກັບຄວາມເຄັ່ງຕຶງດ້ານການຄ້າທີ່ທະວີຄວາມຮຸນແຮງຂຶ້ນກັບສະຫະລັດ.

ຮ່າງກົດໝາຍສະບັບຫຼ້າສຸດ ໃຫ້ອໍານາດແກ່ລັດຖະບານໃນການຕອບໂຕ້ຕໍ່ປະເທດ ຫຼື ກຸ່ມເສດຖະກິດໃດໆກໍຕາມ ທີ່ວາງມາດຕະການທາງການຄ້າ ຫຼື ສິ່ງແວດລ້ອມ ທີ່ຖືວ່າເປັນອັນຕະລາຍຕໍ່ການສົ່ງອອກຂອງບຣາຊິນ ຫຼື ຄວາມສາມາດໃນການແຂ່ງຂັນລະດັບໂລກໃນດ້ານກະສິກໍາ ແລະ ອຸດສາຫະກໍາຕ່າງໆ.

ພາຍໃຕ້ກົດໝາຍໃໝ່, ສະພາການຄ້າຕ່າງປະເທດຂອງບຣາຊິນ ຈະໄດ້ຮັບສິດອໍານາດເພື່ອວາງມາດຕະການຕອບໂຕ້ ເຊັ່ນ: ການຈໍາກັດການຄ້າ, ການໂຈະການສໍາປະທານ ຫຼື ກວດກາຄືນພັນທະພາຍໃຕ້ຂໍ້ຕົກລົງການລົງທຶນ ແລະ ຊັບສິນທາງປັນຍາ; ຢ່າງໃດກໍຕາມ, ການຕອບໂຕ້ໂດຍອັດຕະໂນມັດບໍ່ສາມາດເຮັດໄດ້, ເນື່ອງຈາກກົດໝາຍກໍານົດໃຫ້ຕ້ອງມີການປຶກສາຫາລືທາງການທູດ ກ່ອນຈະດໍາເນີນການຢ່າງເປັນທາງການ.

# ສີ ຈິ້ນຜິງ ລົງນາມຄໍາສັ່ງບັງຄັບໃຊ້ກົດໝາຍຄຸ້ມຄອງຢາໃນກອງທັບ



(Xinhua) - ວັນທີ 10 ເມສາຜ່ານມາ, ທ່ານ ສີ ຈິ້ນຜິງ ປະທານຄະນະກໍາມະການທະຫານສູນກາງ (Central Military Commission-CMC) ໄດ້ລົງນາມໃນຄໍາສັ່ງທີ່ເຜີຍແຜ່ຄໍາແນະນໍາສະບັບປັບປຸງກ່ຽວກັບການບັງຄັບໃຊ້ກົດໝາຍຄຸ້ມຄອງຢາໃນກອງທັບຈີນ, ສະພາແຫ່ງລັດ (ຄະນະລັດຖະມົນຕີຈີນ) ແລະ CMC ໄດ້ເຜີຍແຜ່ເອກະສານດັ່ງກ່າວຮ່ວມກັນ.

ທ່ານນາຍົກລັດຖະມົນຕີ ຫຼີ ສຽງ ຍັງໄດ້ລົງນາມໃນດໍາລັດຂອງຄະນະລັດຖະມົນຕີເພື່ອເຜີຍແຜ່ເອກະສານດັ່ງກ່າວ.

ເອກະສານສະບັບໃໝ່ທີ່ຈະມີຜົນບັງຄັບໃຊ້ແຕ່ວັນທີ 1 ມິຖຸນານີ້ເປັນຕົ້ນໄປ, ມີຈຸດປະສົງເພື່ອປັບປຸງການຄຸ້ມຄອງຢາໃນກອງທັບ.

ອີງຕາມຄໍາແນະນໍາສະບັບປັບປຸງນີ້, ຈະມີການດໍາເນີນການເພື່ອສ້າງຄວາມເຂັ້ມແຂງການຄຸ້ມຄອງສາງຢາຂອງກອງທັບ, ຮັບປະກັນການສະໜອງຢາທີ່ໝັ້ນຄົງ, ສົ່ງເສີມການນໍາໃຊ້ຢາຢ່າງສົມເຫດສົມຜົນ ແລະ ປັບປຸງການຄຸ້ມຄອງຢາທີ່ກອງທັບຕ້ອງການເປັນພິເສດ.

ນອກຈາກນີ້, ຄໍາແນະນໍາຍັງໄດ້ຮັບການປັບປຸງເພື່ອຍົກລະດັບການຄວບຄຸມ ແລະ ຮັບປະກັນຄວາມປອດໄພຂອງຢາໃນກອງທັບ; ລະບົບການເກັບຕົວຢ່າງ ແລະ ກວດກາຄຸນນະພາບຢາຂອງກອງທັບ ຈະໄດ້ຮັບການປັບປຸງ ໂດຍມີການນໍາກົດລະບຽບໃໝ່ມາໃຊ້ໃນການຄຸ້ມຄອງຄວາມສ່ຽງດ້ານຄວາມປອດໄພຂອງຢາ, ໃນຂະນະທີ່ກົນໄກໃນການຈັດການແລະປ້ອງກັນກິດຈະກໍາທີ່ຜິດກົດໝາຍ ຈະໄດ້ຮັບການປັບປຸງເພີ່ມຕື່ມ.

# ພາຍໃຕ້ກົດໝາຍໃໝ່ຂອງອິດສະຕຣາລີ ຄໍາເຕືອນສຸຂະພາບ ພິມໃສ່ຢາສູບແຕ່ລະກອກ




(Xinhua) - ອິດສະຕຣາລີ ກາຍເປັນປະເທດທີ 2 ໃນໂລກ ທີ່ພິມຄໍາເຕືອນສຸຂະພາບໃສ່ຢາສູບແຕ່ລະກອກ; ພາຍໃຕ້ກົດໝາຍການຫຸ້ມຫໍ່ຢາສູບທີ່ມີຜົນບັງຄັບໃຊ້ເມື່ອວັນອັງຄານທີ 1 ເມສາຜ່ານມາ, ຢາສູບແຕ່ລະກອກທີ່ຂາຍໃນອິດສະຕຣາລີ ຈະພິມຄໍາເຕືອນສຸຂະພາບ 1 ໃນ 8 ລາຍການ.

ຄໍາເຕືອນສຸຂະພາບໃໝ່ຢູ່ຢາສູບແຕ່ລະກອກ ມີຄໍາວ່າ "ກໍ່ໃຫ້ເກີດມະເຮັງ 16 ຊະນິດ", "ທໍາລາຍປອດ" ແລະ "ມີພິດໃນທຸກຄໍາສູບ".

ການາດາ ເປັນປະເທດດຽວທີ່ມີຄໍາເຕືອນຄ້າຍຄືກັນຢູ່ຢາສູບແຕ່ລະກອກ.

ໃນປີ 2012, ອິດສະຕຣາລີ ກາຍເປັນປະເທດທໍາອິດໃນໂລກທີ່ນໍາການຫຸ້ມຫໍ່ແບບທໍາມະດາມາໃຊ້ກັບຜະລິດຕະພັນຢາສູບ ໂດຍການແທນທີ່ຍີ່ຫໍ້ສິນຄ້າດ້ວຍຄໍາເຕືອນສຸຂະພາບທີ່ມີຮູບພາບ (graphic).

ກົດໝາຍສະບັບໃໝ່ ໄດ້ລະບຸຄໍາເຕືອນສຸຂະພາບທີ່ມີຮູບພາບ 10 ຮູບແບບໃໝ່ ເຊິ່ງຈະຖືກພິມໃສ່ໃນການຫຸ້ມຫໍ່ຢາສູບ ລວມທັງແຜ່ນພັບໃໝ່ 10 ແບບ ທີ່ຈະໃສ່ໄວ້ໃນການຫຸ້ມຫໍ່ ເພື່ອໃຫ້ຂໍ້ມູນກ່ຽວກັບຜົນປະໂຫຍດຂອງການເຊົາສູບຢາ.

ອີງຕາມສະຖາບັນສຸຂະພາບ ແລະ ສະຫວັດດີການອິດສະຕຣາລີ, ອັດຕາສ່ວນຂອງຊາວອິດສະຕຣາລີ ທີ່ມີອາຍຸ 14 ປີຂຶ້ນໄປທີ່ສູບຢາເປັນປົກກະຕິ ໄດ້ຫຼຸດລົງຈາກ 25% ໃນປີ 1993 ເຫຼືອ 8.3% ໃນປີ 2022-23.

# ຄະນະຜູ້ແທນຂັ້ນສູງ NPC ຢ້ຽມຢາມມົງໂກລີ

(Xinhua) - ຕອບສະໜອງຕາມຄຳເຊີນຂອງສະພາຄູຣານໃຫຍ່ (ລັດຖະສະພາ) ມົງໂກລີ, ທ່ານ ໂລຊັງ ຈາມຈັນ (Losang Jamcan) ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ(NPC) ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມມົງໂກລີ ລະຫວ່າງວັນທີ 12-15 ເມສາ 2025.



ໃນການຢ້ຽມຢາມຄັ້ງນີ້, ທ່ານ ໂລຊັງ ຈາມຈັນ ໄດ້ພົບປະກັບທ່ານດາຊເຊກເວອາມາຣ໌ບາຢາສກາລານ (Dashzegve Amarbayasgalan) ປະທານສະພາຄູຣານໃຫຍ່ ແລະ ເປັນປະທານຮ່ວມກອງປະຊຸມຄັ້ງທີ 6 ຂອງກົນໄກການແລກປ່ຽນລັດຖະສະພາສອງປະເທດ ກັບທ່ານ ຄູເຣລບາຕາຣ໌ ບູລກັນຕູຢາ (KhurelbaatarBulgantuya) ຮອງປະທານສະພາຄູຣານໃຫຍ່.

ທ່ານ ໂລຊັງ ຈາມຈັນ ກ່າວເຖິງຜົນສຳເລັດໃນການພົວພັນສອງຝ່າຍໃນທາງບວກ ໂດຍກ່າວວ່າ: ພາຍໃຕ້ການຊີ້ນຳທາງຍຸດທະສາດຂອງການນຳທັງສອງປະເທດ, ການພົວພັນ ຈີນ-ມົງໂກລີໄດ້ຮັກສາຈັງຫວະການພັດທະນາຢ່າງບໍ່ຢຸດຢັ້ງໃນຊຸມປີມໍ່ໆມານີ້; ພາຍໃຕ້ການນຳພາຂອງການສ້າງປະຊາຄົມທີ່ມີອະນາຄົດຮ່ວມກັນຂອງສອງປະເທດ, ຈີນພ້ອມທີ່ຈະຮ່ວມມືກັບ ມົງໂກລີ ເພື່ອເພີ່ມທະວີການຮ່ວມມືດ້ານຍຸດທະສາດການພັດທະນາ, ລົງເລິກການຮ່ວມມືໃນຫຼາຍຂົງເຂດ ແລະ ແລກປ່ຽນປະສົບການໃນການບໍລິຫານລັດ, ເພີ່ມທະວີການພົວພັນລະຫວ່າງສອງອົງການນິຕິບັນຍັດ, ແລະ ສະໜັບສະໜູນເຊິ່ງກັນແລະກັນ ບົນເສັ້ນທາງກ້າວໄປສູ່ການພັດທະນາທີ່ທັນສະໄໝ.

ຝ່າຍມົງໂກລີກ່າວວ່າ ການພັດທະນາການພົວພັນກັບຈີນແມ່ນທິດທາງຕົ້ນຕໍຂອງນະໂຍບາຍການຕ່າງປະເທດຂອງຕົນ ແລະ ຫວັງວ່າຈະຮັກສາຈັງຫວະການແລກປ່ຽນລະດັບສູງກັບຈີນ, ລົງເລິກການຮ່ວມມືທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ, ແລະ ເພີ່ມທະວີການແລກປ່ຽນລະຫວ່າງອົງການນິຕິບັນຍັດ.

ຝ່າຍມົງໂກລີຢ້ຳຄືນເຖິງການຍຶດໝັ້ນຫຼັກການຈີນດຽວ.

# ສະພາແຫ່ງຊາດ Mozambique ອະນຸມັດກົດໝາຍ ເພື່ອການເຈລະຈາລະດັບຊາດ ແລະ ການປະຕິຮູບລັດຢ່າງຮອບດ້ານ



(Xinhua) - ວັນພຸດທີ 2 ເມສາຜ່ານມາ, ສະພາແຫ່ງຊາດ ແຫ່ງສາທາລະນະລັດໂມຊຳບິກ ໄດ້ມີມະຕິເປັນເອກະສັນດ້ວຍການລົງຄະແນນສຽງສະໜັບສະໜູນຮັບຮອງເອົາຮ່າງກົດໝາຍວ່າດ້ວຍຄວາມມຸ່ງໝັ້ນທາງການເມືອງຕໍ່ການເຈລະຈາລະດັບຊາດ ແລະ ສັນຕິພາບຢ່າງຮອບດ້ານ.

ເອກະສານທີ່ປະທານາທິບໍດີ ດານຽວ ຊາໂປ (Daniel Chapo) ສົ່ງໄປຍັງສະພາແຫ່ງຊາດ ໄດ້ກຳນົດຫຼັກການສຳລັບຂະບວນການອະພິປາຍຢ່າງລະອຽດສຳລັບການປະຕິຮູບລັດ, ລະບົບຍຸຕິທຳ ແລະ ຮູບແບບການເລືອກຕັ້ງຂອງປະເທດ; ຂໍ້ສະເໜີນີ້ ໄດ້ຮັບການສະໜັບສະໜູນຈາກທັງ 4 ພັກການເມືອງທີ່ມີທີ່ນັ່ງໃນສະພາແຫ່ງຊາດ.

ເອດູອາຣ໌ໂດ ມູເລມເວ (Eduardo Mulembwe) ລັດຖະມົນຕີຝ່າຍກິດຈະການສະພາແຫ່ງຊາດ, ລັດຖະບານທ້ອງຖິ່ນ ແລະສະພາແຂວງເຊິ່ງນຳສະເໜີເອກະສານດັ່ງກ່າວຕໍ່ສະພາແຫ່ງຊາດ ໄດ້ເນັ້ນໜັກວ່າ: ຂໍ້ລິເລີ່ມນີ້ ມີຈຸດປະສົງເພື່ອ "ເອົາຊະນະບັນດາສິ່ງທ້າທາຍທາງການເມືອງ ແລະເສດຖະກິດຂອງປະເທດໃນປັດຈຸບັນ; ສົ່ງເສີມການປອງດອງຢ່າງມີປະສິດທິຜົນລະຫວ່າງຊາວໂມຊຳບິກ, ການເຕົ້າໂຮມຄວາມສາມັກຄີແຫ່ງຊາດ, ຄວາມສາມັກຄີໃນສັງຄົມ, ສະຖຽນລະພາບທາງການເມືອງ, ແລະ ການສ້າງຄວາມເຂັ້ມແຂງໃຫ້ອົງການລັດ".

ກົດໝາຍດັ່ງກ່າວຍັງໄດ້ກຳນົດໃຫ້ສ້າງຕັ້ງຄະນະວິຊາການ 21 ຄົນ, ໂດຍມີຕົວແທນ 18 ຄົນ ໄດ້ຮັບການແຕ່ງຕັ້ງຈາກພັກການເມືອງ ແລະ 3 ຄົນ ໄດ້ຮັບການແຕ່ງຕັ້ງຈາກພາກສັງຄົມພົນລະເຮືອນ.

ລັດຖະບານ ແລະ ສະພາແຫ່ງຊາດ ສະແດງຄວາມຫວັງວ່າ ກົດໝາຍສະບັບໃໝ່ນີ້ ຈະຊ່ວຍເພີ່ມທະວີສະຖຽນລະພາບທາງການເມືອງ ແລະ ສະຖາບັນຂອງໂມຊຳບິກ, ຮັບປະກັນການເຂົ້າຮ່ວມຫຼາຍຂຶ້ນໃນຂະບວນການຕັດສິນໃຈລະດັບຊາດແລະສົ່ງເສີມສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການພັດທະນາ.

# Tanzania ຈະຈັດການເລືອກຕັ້ງ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ



ເອັມມານູເອລ ເອັນຊິມບີ

(Xinhua) - ການເລືອກຕັ້ງທົ່ວໄປຂອງຕັງຊານີ ທີ່ກຳນົດໄວ້ໃນເດືອນຕຸລາ 2025 ຈະຈັດຂຶ້ນຕາມລັດຖະທຳມະນູນຂອງປະເທດ, ເຈົ້າໜ້າທີ່ຂັ້ນສູງຂອງພັກລັດຖະບານ Chama Cha Mapinduzi (CCM) ຫຼື ພັກແຫ່ງການປະຕິວັດ (Party of the Revolution) ກ່າວເມື່ອວັນສຸກທີ 4 ເມສາຜ່ານມາ.

ເອັມມານູເອລເອັນຊິມບີ (Emmanuel Nchimbi) ເລຂາທິການໃຫຍ່ CCM ກ່າວໃນເວລາກ່າວຕໍ່ບັນດານັກຂ່າວຢູ່ເມືອງຊອງເກຍ (Songea) ໃນພາກພື້ນຣູວູມາ (Ruvuma) ວ່າ "ບໍ່ມີໃຜມີອຳນາດທີ່ຈະຂັດຂວາງການຈັດການເລືອກຕັ້ງທົ່ວໄປໄດ້".

ເອັນຊິມບີ ເຊິ່ງຍັງເປັນຜູ້ສະໝັກຄູ່ກັບປະທານາທິບໍດີ ຊາມິອາ ຊູລູຮູ ຮັສຊັນ (Samia Suluhu Hassan) ໃນການເລືອກຕັ້ງປະທານາທິບໍດີ ໄດ້ຕອບໂຕ້ຕໍ່ການໂຄສະນາທີ່ມີຊື່ວ່າ "ບໍ່ປະຕິຮູບ, ບໍ່ເລືອກຕັ້ງ" ທີ່ລິເລີ່ມໂດຍພັກຝ່າຍຄ້ານຕົ້ນຕໍ Chama Cha Demokrasiana Maendeleo (CHADEMA) ຫຼື ພັກເພື່ອປະຊາທິປະໄຕແລະຄວາມກ້າວໜ້າ (Party for Democracy and Progress) ໂດຍກ່າວວ່າ "ປະເທດຂອງພວກເຮົາຈັດການເລືອກຕັ້ງທົ່ວໄປທຸກໆຫ້າປີ, ບໍ່ມີໃຜສາມາດຂັດຂວາງການໃຊ້ອຳນາດຕາມລະບອບປະຊາທິປະໄຕນີ້ໄດ້ ແມ່ນແຕ່ປະທານາທິບໍດີ, ຮອງປະທານາທິບໍດີ ແລະ ນາຍົກລັດຖະມົນຕີ ເພາະສິ່ງນີ້ໄດ້ກຳນົດໄວ້ໃນລັດຖະທຳມະນູນຂອງພວກເຮົາ".

ທ້າຍປີຜ່ານມາ, CHADEMA ໄດ້ເລີ່ມຕົ້ນການໂຄສະນາພາຍໃຕ້ຄຳຂວັນຂອງພັກ "ບໍ່ປະຕິຮູບ, ບໍ່ເລືອກຕັ້ງ", ຮຽກຮ້ອງໃຫ້ມີການປ່ຽນແປງຢ່າງໃຫຍ່ຫຼວງຕໍ່ລະບົບການເລືອກຕັ້ງ; ຕາມຄຳກ່າວຂອງ ຕຸນດູ ລິຊຊູ (Tundu Lissu) ປະທານ CHADEMA, ຄະນະກຳມະການການເລືອກຕັ້ງ ຕ້ອງໄດ້ຮັບການປະຕິຮູບ ແລະ ລັດຖະກອນທີ່ຖືກແຕ່ງຕັ້ງໂດຍປະທານາທິບໍດີ ບໍ່ຄວນເປັນສ່ວນໜຶ່ງຂອງຄະນະກຳມະການ.

ຄະນະກຳມະການການເລືອກຕັ້ງແຫ່ງຊາດເອກະລາດ (Independent National Electoral Commission - INEC) ກ່າວເມື່ອວັນຈັນທີ 14 ເມສາວ່າ ຈະມີການລົງທະບຽນຜູ້ມີສິດເລືອກຕັ້ງໃໝ່ 1,396,609 ຄົນ ໃນລະຫວ່າງການປັບປຸງທະບຽນຜູ້ມີສິດເລືອກຕັ້ງໄລຍະທີສອງເຊິ່ງມີກຳນົດຈະດຳເນີນຕັ້ງແຕ່ວັນທີ 1 ພຶດສະພາ ຫາ ວັນທີ 4 ກໍລະກົດ.

ຈາຄອບສ໌ ເອັມວຳເບເກເລ (Jacobs Mwambegele) ປະທານ INEC ກ່າວວ່າ ຈະມີການອັບເດດຂໍ້ມູນຜູ້ມີສິດເລືອກຕັ້ງອີກ 1,092,383 ຄົນ, ໃນຂະນະທີ່ຜູ້ມີສິດເລືອກຕັ້ງ 148,624 ຄົນຈະຖືກຕັດສິດເນື່ອງຈາກບໍ່ມີສິດ.

ການລົງທະບຽນແລະການປັບປຸງທະບຽນຜູ້ມີສິດເລືອກຕັ້ງໄລຍະທີສອງ ມີກຳນົດຈັດຂຶ້ນເປັນສາມຮອບ.

ໃນລະຫວ່າງການຖະແຫຼງຂ່າວທີ່ນະຄອນຫຼວງໂດໂດມາ (Dodoma), ເອັມວຳເບເກເລ ເປີດເຜີຍວ່າ ຮອບທຳອິດຈະກວມເອົາ 15 ແຄວ້ນທົ່ວແຜ່ນດິນໃຫຍ່ ແລະແຊນຊິບາຣ໌ (Zanzibar ເປັນໝູ່ເກາະຂອງຕັງຊານີ, ຢູ່ນອກຊາຍຝັ່ງຂອງອາຟຣິກາຕາເວັນອອກ), ຕາມດ້ວຍ 16 ແຄວ້ນໃນຮອບທີສອງ, ຮອບທີສາມຈະເນັ້ນໃສ່ສະຖານກັກຂັງ ໂດຍມຸ່ງເປົ້າໄປທີ່ 130 ສູນ ໃນຄຸກແຜ່ນດິນໃຫຍ່ ແລະ 10 ສູນໃນສະຖານດັດສ້າງຂອງແຊນຊິບາຣ໌.

ອີງຕາມຂໍ້ມູນຂອງເອັມວຳເບເກເລ, INEC ໄດ້ກຳນົດສູນລົງທະບຽນແລະອັບເດດຂໍ້ມູນຜູ້ມີສິດເລືອກຕັ້ງ 7,659 ແຫ່ງ ໃນແຜ່ນດິນໃຫຍ່ ແລະ ອີກ 210 ແຫ່ງໃນແຊນຊິບາຣ໌ ສຳລັບການລົງທະບຽນໄລຍະທີສອງ; ພົນລະເມືອງທີ່ມີອາຍຸ 18 ປີຂຶ້ນໄປໃນລະຫວ່າງການເລືອກຕັ້ງທົ່ວໄປ ສາມາດລົງທະບຽນໄດ້.

ໃນເດືອນຕຸລາ, ຊາວຕັງຊານີ ຈະລົງຄະແນນສຽງເລືອກຕັ້ງສະມາຊິກສະພາເທດສະບານ, ສະມາຊິກສະພາແຫ່ງຊາດແລະປະທານາທິບໍດີໃນການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນຫຼັງຈາກຫ້າປີ.



# Moldova ຈະຈັດການເລືອກຕັ້ງລັດຖະສະພາ ໃນວັນທີ 9 ກັນຍາ




(Xinhua) - ສາທາລະນະລັດໂມນດາວີ ຈະຈັດການເລືອກຕັ້ງລັດຖະສະພາ ໃນວັນທີ 28 ກັນຍານີ້, ພາຍຫຼັງການລົງຄະແນນສຽງໃນສະພານິຕິບັນຍັດ ເມື່ອວັນພະຫັດທີ17ເມສາຜ່ານມາ; ມະຕິດັ່ງກ່າວ ໄດ້ຮັບການອະນຸມັດຈາກສະມາຊິກລັດຖະສະພາ 57 ທ່ານ, ງົດອອກສຽງ 32 ທ່ານ (ທັງໝົດ 101 ທີ່ນັ່ງ) ແລະ ຈະມີຜົນສັກສິດເມື່ອເຜີຍແຜ່ໃນວາລະສານທາງການຂອງປະເທດ.

ພາຍໃຕ້ກົດໝາຍຂອງໂມນດາວີ, ການເລືອກຕັ້ງສະມາຊິກລັດຖະສະພາ ຈະຈັດຂຶ້ນທຸກໆສີ່ປີ ໂດຍກຳນົດວັນບໍ່ເກີນ 3 ເດືອນກ່ອນໝົດອາຍຸການປັດຈຸບັນ. ລັດຖະສະພາຊຸດປັດຈຸບັນ ໄດ້ຮັບການເລືອກຕັ້ງໃນວັນທີ 11 ກໍລະກົດ 2021.

# ອີຣັກ ກຳນົດວັນທີ 11 ພະຈິກ ເປັນວັນເລືອກຕັ້ງລັດຖະສະພາ



(Xinhua) - ວັນພຸດທີ 9 ເມສາຜ່ານມາ, ຄະນະລັດຖະມົນຕີຂອງອີຣັກ ໄດ້ອະນຸມັດໃຫ້ວັນທີ 11 ພະຈິກ 2025 ເປັນວັນເລືອກຕັ້ງລັດຖະສະພາຄັ້ງຕໍ່ໄປ, ຕາມຖະແຫຼງການຂອງສຳນັກງານນາຍົກລັດຖະມົນຕີ.

ການຕັດສິນໃຈທີ່ໄດ້ຮັບການອະນຸມັດໃນລະຫວ່າງການລົງຄະແນນສຽງໃນຄະນະລັດຖະມົນຕີ ຈະເຮັດໃຫ້ຊາວອີຣັກເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນ ຊຸດໃໝ່ 329 ທີ່ນັ່ງ ເຊິ່ງເປັນອົງການຮັບຜິດຊອບໃນການຈັດຕັ້ງລັດຖະບານ ແລະ ອອກກົດໝາຍ.

ຈູມານາ ອັລ-ກາໄລ (Jumana al-Ghalai) ໂຄສົກຄະນະກຳມະການການເລືອກຕັ້ງລະດັບສູງເອກະລາດ (Independent High Electoral Commission - IHEC) ກ່າວວ່າ ຄະນະກຳມະການໄດ້ກະກຽມຈັດການເລືອກຕັ້ງຕາມກຳນົດເວລາ. ເມື່ອເດືອນມີນາ, IHEC ກ່າວວ່າຊາວອີຣັກຫຼາຍກວ່າ29ລ້ານຄົນ ມີສິດລົງຄະແນນສຽງ.

ອີຣັກຍັງຕົກຢູ່ໃນຄວາມບໍ່ແນ່ນອນທາງການເມືອງມາເປັນເວລາຫຼາຍກວ່າ 2 ທົດສະວັດ ຫຼັງຈາກການຮຸກຮານທີ່ນຳໂດຍສະຫະລັດໃນປີ2003; ການລົງຄະແນນສຽງໃນລັດຖະສະພາຄັ້ງຫຼ້າສຸດທີ່ຈັດຂຶ້ນໃນປີ 2021 ກໍ່ໃຫ້ເກີດການປະທະກັນທີ່ຮຸນແຮງໃນນະຄອນຫຼວງແບກແດດ ແລະ ນຳໄປສູ່ການຢຸດສະງັກເປັນເວລາ 11 ເດືອນ ກ່ອນທີ່ຈະມີການຈັດຕັ້ງລັດຖະບານ.



## ຄະນະ...

(ຕໍ່ຈາກໜ້າ 1)

ຢູ່ສສ.ຫວຽດນາມໃນລະຫວ່າງວັນທີ 22-26 ເມສາ 2025.

ວັນທີ 23 ເມສາ, ສະຫາຍ ສົນຍາ ປຣະເສີດ ພ້ອມດ້ວຍຄະນະໄດ້ພົບປະເຮັດວຽກ ແລະ ປຶກສາຫາລື ກັບສະຫາຍ ຫວູ ຫ້າຍ ຫ່າ (Vũ Hải Hà) ກຳມະການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳປຶ້ມ 50 ປີ ຂອງສະພາແຫ່ງຊາດຫວຽດນາມພ້ອມດ້ວຍຄະນະ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ, ສະໜິດສະໜົມຖານສະຫາຍອ້າຍນ້ອງ. ສອງຝ່າຍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ປຶກສາຫາລືກ່ຽວກັບການສ້າງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ-ການຮ່ວມມືຮອບດ້ານ ແລະ ການພັດທະນາ; ທັງສອງຝ່າຍໄດ້ມີຄວາມເປັນເອກະພາບກັນໂດຍພື້ນຖານ ເປັນຕົ້ນແມ່ນດ້ານເນື້ອໃນ ແລະ ດ້ານເຕັກນິກເຊິ່ງປຶ້ມ50ປີປະກອບມີຢູ່ 3 ພາກຄື: ພາກທີ 1 ພື້ນຖານການສ້າງ ແລະ ເສີມຂະຫຍາຍສາຍພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ, ພາກທີ 2 ຂະບວນວິວັດແຫ່ງການເສີມຂະຫຍາຍສາຍພົວພັນພິເສດ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ, ພາກທີ3ຜົນສຳເລັດ, ຈຸດພິເສດ, ບົດຮຽນ ແລະ ວິທີການຊຸກຍູ້ໃນການເສີມຂະຫຍາຍສາຍພົວພັນພິເສດລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ. ພ້ອມດຽວກັນນັ້ນ, ໄດ້ຮ່ວມປຶກສາກັນອອກແບບໜ້າປົກຂອງປຶ້ມ, ຄັດເລືອກເອົາຮູບພາບປະກອບ ແລະ ກຳນົດຈຸດ ທີ່ຈະປະກອບຮູບພາບເຂົ້າໃຫ້ສອດຄ່ອງ ແລະ ເໝາະສົມກັບເນື້ອໃນຢູ່ທັງ 3 ພາກ, ບົດຄຳເຫັນຂອງສອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ແລະ ການກຳນົດລາຍຊື່ຄະນະຮັບຜິດຊອບໃນການສ້າງປຶ້ມ; ພ້ອມນີ້, ຄະນະຊ່ຽວຊານທັງສອງຝ່າຍ ກໍໄດ້ສືບຕໍ່ປຶກສາຫາລືການກຳນົດທິດທາງແຜນການເຮັດວຽກຮ່ວມກັນກັນ ເພື່ອໃຫ້ປຶ້ມດັ່ງກ່າວສຳເລັດເປັນສະບັບທຳອິດທີ່ຄົບຖ້ວນພາຍໃນເດືອນພຶດສະພານີ້ ຫຼັງຈາກທັງສອງຝ່າຍເຫັນດີເພື່ອຈັດພິມ ແລະ ຈັດພິທີເປີດນຳໃຊ້ປຶ້ມດັ່ງກ່າວໃນເດືອນກັນຍາ 2025 ເພື່ອສະເຫຼີມສະຫຼອງຄົບຮອບ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມແລະຄົບຮອບ 80 ປີ ແຫ່ງການສ້າງຕັ້ງສະພາແຫ່ງຊາດຫວຽດນາມ.

ໃນຕອນແລງຂອງວັນດຽວກັນ, ສະຫາຍ ສົນຍາ ປຣະເສີດ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ຫງວຽນ ຄັກດິ້ງ (Nguyễn Khắc Định) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ. ສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ; ຕີລາຄາສູງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດກໍຄືປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມທີ່ນັບມື້ແຕກດອກອອກຜົນຍິ່ງຂຶ້ນ. ສະຫາຍຫງວຽນ ຄັກດິ້ງ ໄດ້ຕີລາຄາສູງຕໍ່ກັບການມາເຮັດວຽກຂອງຄະນະຜູ້ແທນຢູ່ ສສ.ຫວຽດນາມ ໃນຄັ້ງນີ້; ການສ້າງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດຫວຽດນາມ ແລະ ສະພາແຫ່ງຊາດລາວ-ການຮ່ວມມືຮອບດ້ານ ແລະ ການພັດທະນາ ເຊິ່ງເປັນປຶ້ມປະຫວັດສາດ, ເປັນເອກະສານສຳຄັນໃຫ້ແກ່ພະນັກງານ-ລັດຖະກອນ, ປັນຍາຊົນ, ຄົນຮຸ່ນໜຸ່ມ ແລະ ຜູ້ທີ່ສົນໃຈ ໄດ້ສຶກສາຄົ້ນຄວ້າ. ພ້ອມນີ້, ຍັງໄດ້ໃຫ້ທິດຊີ້ນຳໃນການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ເປັນຕົ້ນແມ່ນການແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງຈົນຮອດວິຊາການ ນັບແຕ່ສູນກາງຈົນຮອດທ້ອງຖິ່ນ ຕິດພັນກັບການຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນດ້ານວິຊາການໃນຫົວຂໍ້ຕ່າງໆ; ຮ່ວມກັນຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ຊ່ວຍເຫຼືອ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນໃນການເຄື່ອນໄຫວວຽກງານໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເຊັ່ນ: ເວທີສະມັດຊາລັດຖະສະພາສາກົນ (IPU), ເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF), ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ(AIPA)ແລະອື່ນໆ.

ວັນທີ 24-26 ເມສາ, ຄະນະຮັບຜິດຊອບການສ້າງປຶ້ມ 50 ປີ ຂອງສະພາແຫ່ງຊາດລາວ ໄດ້ເດີນທາງໄປຢ້ຽມຢາມເມືອງສະປາ ແຂວງລາວກາຍ ໂດຍໄດ້ເຂົ້າຢ້ຽມພົບປະສະຫາຍ ຫວູ ວັນກ່າຍ ກຳມະການຄະນະປະຈຳພັກແຂວງ, ຮອງປະທານ ຜູ້ປະຈຳການສະພາປະຊາຊົນແຂວງລາວກາຍ ເຊິ່ງໄດ້ຮັບຟັງການລາຍງານການພັດທະນາເສດຖະກິດ-ສັງຄົມຂອງແຂວງໂດຍສັງເຂບ ແລະ ທ່ຽວຊົມສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງຈຳນວນໜຶ່ງຂອງແຂວງອີກດ້ວຍ.

## ຮຽບຮຽງເນື້ອໃນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 23 ເມສານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາປະທານ ແລະ ຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີກະຊວງພາຍໃນ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງພັກ, ຄະນະກົມສົນທິສັນຍາແລະກົດໝາຍ ຂອງກະຊວງການຕ່າງປະເທດ, ຄະນະກົມທີ່ກ່ຽວຂ້ອງຂອງກະຊວງການເງິນ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ໄດ້ກ່າວວ່າ: ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 19 ມີນາ 2025 ຈຳນວນ 45 ທ່ານເຊິ່ງກວມເອົາ 33 ມາດຕາ, 102 ເນື້ອໃນແລະໃນຕອນເຊົ້າຂອງວັນທີ 20 ມີນາ 2025 ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປັບປຸງ ໄດ້ຜ່ານການຮັບຮອງເອົາດ້ວຍຄະແນນສຽງເຫັນດີ94.83%; ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະ ເລິກເຊິ່ງ ເພື່ອເລືອກເຟັ້ນເອົາບັນດາຄຳເຫັນຂອງ ສສຊ ມາພິຈາລະນາປັບປຸງໃສ່ເນື້ອໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນເປັນຄັ້ງສຸດທ້າຍ ເພື່ອໃຫ້ຮ່າງກົດໝາຍດັ່ງກ່າວມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ ກ່ອນນຳສະເໜີປະທານສະພາແຫ່ງຊາດລົງລາຍເຊັນ.

**(ສອນສັກ ວັນວິໄຊ)**

# ເບິ່ງໄວ້ ໄດ້ບົດຮຽນ

## ຮູ້ວິທີດຶງດູດການລົງທຶນ ແລະ ການຊອກລາຍຮັບຢູ່ຕະຫຼາດແຮງງານຕ່າງແດນ

❖ ວິເສດ ສະແຫວງສຶກສາ

ເລື່ອງລາວຈັດມາໃຫ້ອ່ານໃນບົດນີ້ ເວົ້າເຖິງວິທີການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ແລະ ເລື່ອງແຮງງານຕ່າງປະເທດ ປະເທດທີ່ສາມາດສົ່ງເງິນຈາກນໍ້າເຫື່ອນໍ້າແຮງຂອງພວກຕົນກັບສູ່ປະເທດໃນຈຳນວນຫຼວງຫຼາຍ. ທັງໝົດເປັນຂ່າວຈາກ ອິນໂດເນເຊຍ, ຈີນ, ກຳປູເຈຍແລະຟີລິບປິນຕາມລຳດັບ.

ຂໍເລີ່ມຈາກຂ່າວກ່ຽວກັບເປົ້າໝາຍຂອງອິນໂດເນເຊຍໃນການດຶງດູດການລົງທຶນໃຫ້ໄດ້ 815 ຕື້ໂດລາ ເພື່ອຊຸກຍູ້ລວມຍອດຜະລິດຕະພັນພາຍໃນ (GDP) ໃນໄລຍະແຕ່ປີ 2025-2029, ດ້ວຍຈຳນວນເງິນລົງທຶນດັ່ງກ່າວ GDP ຂອງປະເທດຈະບັນລຸ 8% ທຽບກັບທົດສະວັດຜ່ານມາ, ອັດຕາເງິນລົງທຶນໃນ 5 ປີ (2025-2029) ນີ້ ຈະເພີ່ມຂຶ້ນສູງເຖິງ 143%. ໃນປັດຈຸບັນ, ການລົງທຶນໃນໂຄງສ້າງເສດຖະກິດຂອງອິນໂດເນເຊຍ ມີອັດຕາສ່ວນດັ່ງນີ້: ປະມານ 53% ຂອງການເຕີບໂຕທາງເສດຖະກິດຂອງປະເທດນັ້ນ ຂັບເຄື່ອນດ້ວຍການບໍລິໂພກພາຍໃນ, 28% ດ້ວຍການລົງທຶນ, 9% ດ້ວຍການໃຊ້ຈ່າຍຂອງລັດຖະບານ ແລະ 2% ດ້ວຍມູນຄ່າການສົ່ງອອກສຸດທິ; ແຕ່ໃນໄລຍະ 5 ປີ (2025-2029) ຕໍ່ໜ້າ, ການລົງທຶນຈະເຮັດບົດບາດຂັບເຄື່ອນເສດຖະກິດເພາະການລົງທຶນໂດຍສະເລ່ຍຈະຢູ່ໃນອັດຕາ 15.67% ຕໍ່ປີ.

ໃນໂລກປັດຈຸບັນ, ປະເທດໃດເກັ່ງໃນການດຶງດູດການລົງທຶນ ປະເທດນັ້ນກໍຈະມີທ່າເຕີບໂຕຢ່າງໄວວາ ແລະ ໝັ້ນຄົງ.

ນອກຈາກ ອິນໂດເນເຊຍ ແລ້ວ, ທາງ ສປຈີນ ກໍເປັນອີກປະເທດໜຶ່ງທີ່ເນັ້ນການດຶງດູດການລົງທຶນພິເສດ ແມ່ນການລົງທຶນຈາກຕ່າງປະເທດ; ສຳລັບປີ 2025 ນີ້ ຈີນ ໄດ້ກຳນົດ 20 ມາດຕະການ ທີ່ເປັນຮູບປະທຳໃນ 4 ດ້ານ ເພື່ອດຶງດູດການລົງທຶນຕ່າງປະເທດຄື: ເປີດກວ້າງປະຕູສູ່ພາຍນອກຢ່າງເປັນເຈົ້າການ ແລະ ເປັນລະບຽບ, ຍົກລະດັບການຊຸກຍູ້ການລົງທຶນ, ເພີ່ມປະສິດທິພາບຂອງເວທີເປີດປະຕູສູ່ພາຍນອກ ແລະ ອັນທີ 4 ແມ່ນເຮັດໃຫ້ການຄໍ້າປະກັນການບໍລິການເພີ່ມຂຶ້ນ. ເວົ້າສະເພາະການຍົກລະດັບການຊຸກຍູ້ການລົງທຶນນັ້ນ (ຂໍ້ທີ 2) ກໍມີ 8 ມາດຕະການຍ່ອຍ ແຕ່ຂໍຍົກໃຫ້ເຫັນແຕ່ມາດຕະການທີ່ພວກເຮົາຄວນເບິ່ງໄວ້ເປັນບົດຮຽນ ເຊັ່ນ: ການບຳລຸງສ້າງຍີ່ຫໍ້ "Made in China", ຊຸກຍູ້ໃຫ້ທຶນຕ່າງປະເທດໄຫຼເຂົ້າສູ່ຂະແໜງການບໍລິການທີ່ທັນສະໄໝ, ຊຸກຍູ້ໃຫ້ທຶນຕ່າງປະເທດ ໄຫຼເຂົ້າສູ່ພາກກາງ, ພາກຕາເວັນຕົກ ແລະພາກຕາເວັນອອກສ່ຽງເໜືອ ຫຼາຍກວ່າເດີມ, ອຳນວຍຄວາມສະດວກໃຫ້ຜູ້ລົງທຶນຕ່າງປະເທດສາມາດຊື້ກິດຈະການການລົງທຶນ ແລະ ອື່ນໆ...

ຕໍ່ໄປຂໍຕໍ່ໃສ່ຂ່າວກ່ຽວກັບແຮງງານກຳປູເຈຍ ແລະ ຟີລິບປິນ ສົ່ງເງິນຈາກນໍ້າເຫື່ອນໍ້າແຮງຂອງພວກຕົນກັບຄືນປະເທດໄດ້ເປັນກອບເປັນກຳ. ໃນສ່ວນກຳປູເຈຍ ຂ່າວໃຫ້ຮູ້ວ່າ: ໃນປີ 2024 ແຮງງານກຳປູເຈຍໃນຕ່າງປະເທດ ໄດ້ສົ່ງເງິນກັບຄືນປະເທດສູງເຖິງ 2.95 ຕື້ໂດລາ ລື່ນຈຳນວນເງິນທີ່ສົ່ງກັບປະເທດ ຈຳນວນ 2.94 ຕື້ໂດລາ ໃນປີ 2023, ແຮງງານກຳປູເຈຍ ທີ່ຕ່າງປະເທດໃນປີ 2024 ນັ້ນ ມີ 1.38ລ້ານຄົນລື່ນ1.35ລ້ານຄົນໃນປີ2023; ແຮງງານກຳປູເຈຍໃນຕ່າງປະເທດສ່ວນໃຫຍ່ແມ່ນເຮັດວຽກຢູ່ປະເທດໄທ (1.2 ລ້ານກວ່າຄົນ) ສ່ວນທີ່ເຫຼືອແມ່ນຢູ່ ສ.ເກົາຫຼີ, ຍີ່ປຸ່ນ, ມາເລເຊຍ ນັ້ນ ໄດ້ເງິນຄ່າແຮງງານໂດຍສະເລ່ຍຄົນລະ 400 ໂດລາຕໍ່ເດືອນ ສ່ວນຢູ່ ສ.ເກົາຫຼີ ແລະ ຍີ່ປຸ່ນ ນັ້ນ ໄດ້ປະມານ 1,500 ໂດລາ/ເດືອນ.

ໃນສ່ວນຂອງຟີລິບປິນ ຂ່າວບອກວ່າແຮງງານຟີລິບປິນໃນຕ່າງປະເທດ ໄດ້ສົ່ງເງິນກັບຄືນປະເທດໃນປີ 2024 ສູງເຖິງ 3.83 ຕື້ໂດລາ ເພີ່ມຂຶ້ນ 3% ທຽບກັບປີ 2023 ແລະຄິດເປັນ 8.3% ຂອງຈີດີພີ, ແຮງງານຟີລິບປິນທີ່ສົ່ງເງິນກັບຄືນປະເທດຫຼາຍກວ່າໝູ່ ແມ່ນພາກສ່ວນທີ່ອອກແຮງງານຢູ່ສະຫະລັດອາເມລິກາ, ຮອງລົງມາແມ່ນຢູ່ ອາຣັບບີ ຊາອຸດິດ, ສິງກະໂປ ແລະ ສະຫະລັດ ອາຣັບ ເອມິເຣດ.

ອ່ານສຸດບົດນີ້, ກໍພໍຈະສະຫຼຸບໄດ້ວ່າ ເພື່ອເຮັດໃຫ້ເສດຖະກິດເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນຄົງນັ້ນ ຈະອາໄສແຕ່ທຶນຂອງລັດແມ່ນບໍ່ໄດ້ເດັດຂາດ; ດັ່ງນັ້ນ, ຕ້ອງອີງອາໄສການລົງທຶນຈາກພາກເອກະຊົນພາຍໃນ ແລະ ການລົງທຶນຕ່າງປະເທດ. ແຕ່ເພື່ອດຶງດູດການລົງທຶນນັ້ນ ກໍຕ້ອງມີເປົ້າໝາຍ, ມີການສ້າງສິ່ງແວດລ້ອມທີ່ເອື້ອອຳນວຍທີ່ຈຳເປັນຕ່າງໆ; ຢາກມີລາຍໄດ້ງາມໆ ຈາກການອອກແຮງງານຢູ່ຕ່າງປະເທດ ກໍຕ້ອງປັບປຸງແຮງງານໃຫ້ມີຄຸນນະພາບ,ຫຼຸດຜ່ອນການສົ່ງແຮງງານດິບແລະສຳຄັນທີ່ສຸດກໍຄື ຈະຕ້ອງເປີດກວ້າງຕະຫຼາດແຮງງານໃນຕ່າງປະເທດ ເພື່ອມີທາງເລືອກຫຼາຍທາງເລືອກ.

ທະນາຄານພັດທະນາລາວ
LDB Bank




## ຮ້ອນກັບເຢັນ

*# ບ່າວກະບື*

**ບ່າວ**ບັງຕົມ ສັກຕາເບິ່ງເຕົ້າແຕ່ກໂມດ (ກະຕິກນໍ້າ) ທີ່ຮ້ານຄ້າ, ພໍດີມີສາວຂາຍເຄື່ອງຍ່າງມາຖາມເຂົາວ່າ: "ມີຫຍັງໃຫ້ຂ້ານ້ອຍຊ່ວຍບໍ່ອ້າຍ?"

"ເອີ... ນັ້ນແມ່ນຫຍັງເກາະ?"

"ອັນນັ້ນຫວະ?... ມັນແມ່ນເຕົ້າແຕ່ກໂມດ"

"ມັນຮັກສາຄວາມຮ້ອນ ແລະ ຄວາມເຢັນ ສຳລັບສິ່ງທີ່ພວກເຮົາເກັບມ້ຽນໄວ້ຂ້າງໃນ"

"ເຮົາຊິຊື້" ບ່າວບັງຕົມວ່າ.

ມື້ຕໍ່ມາ, ອ້າຍບ່າວຖືເຕົ້າແຕ່ກໂມດໄປການບ່າ, ພັກພວກຄົນງານຖາມວ່າເຂົາຖືຫຍັງມາ.

"ມັນແມ່ນເຕົ້າແຕ່ກໂມດ"

"ໃຊ້ສຳລັບຫຍັງ?"

"ມັນຮັກສາຄວາມຮ້ອນ ແລະ ຄວາມເຢັນ ສຳລັບສິ່ງທີ່ເຮົາເກັບໄວ້ຂ້າງໃນ"

"ແລ້ວໂຕເອົາຫຍັງໃສ່ໃນຫັ້ນ?"

"ໄອສະຄຣີມ ແລະ ຈອກກາເຟຮ້ອນໆ"

## Hot and Cold

***# BAOKBU***

Bangtom was looking at a thermos in a store when the salesgirl walked up to him and asked, "May I help you with anything, ? "

"Yes, what is that?"

"Why, that's a thermos!"

"What does it do ?"

"It keeps things hot and it keeps things cold!"

"I'll take it," said Bangtom.

The next day, Bangtom went to work carrying this thermos. His co-workers asked him what he was carrying.

"It's a thermos."

"What does it do ?"

"It keeps things hot and it keeps things cold!"

"So what have you got in it?"

"An icecream and a cup of hot coffee."




ຢາສູບໄຟຟ້າ ຂ້າໂຕເອງ ແລະ ຄົນອ້ອມຂ້າງ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ